ILSTA

Institute for Legal Support and Technical Assistance

# ກອງປະຊຸມແຫ່ງຊາດ ປະຈຳປີ 2020

## ການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ໂດຍເນັ້ນໜັກໃສ່ ບັນຫາການຟອກເງິນ,

ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ແລະ ຫຼັກຖານໃນການດຳເນີນຄະດີອາຍາ

ຄັ້ງວັນທີ **11 – 13** ກຸມພາ **2020**
ທີ່ ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ

ຮ່ວມຈັດໂດຍ :

ອົງການໄອຍະການປະຊາຊົນສູງສຸດ **(OSPP)**

ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ **(ILSTA)**

*ສະໜັບສະໜູນໂດຍ :*

LE GOUVERNEMENT
DU GRAND-DUCHÉ DE LUXEMBOURG
Ministère des Finances

LUXEMBOURG
AID & DEVELOPMENT

สำนักงานอัยการสูงสุด
Office of The Attorney General

สำนักงานป้องกันและปราบปรามการฟอกเงิน
Anti-Money Laundering Office (AMLO)

UNIVERSITÉ DU
LUXEMBOURG

KAUFHOLD & REVEILLAUD

CSD
CENTER FOR THE STUDY OF DEMOCRACY

ຫ້ອງການສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
ຊັ້ນ 6, ຕຶກ NNN, ຖະໜົນ ບູລິຈັນ, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (+856) 21 41 0095 ແຟກ: (+856) 21 41 0096 ອີເມວ: contact@ilsta.org ເວັບໄຊ: www.ilsta.org

# ກອງປະຊຸມແຫ່ງຊາດ ປະຈຳປີ 2020

ກອງປະຊຸມແຫ່ງຊາດ ພາຍໃຕ້ຫົວຂໍ້ ການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ໂດຍເນັ້ນໜັກໃສ່
ບັນຫາການຟອກເງິນ, ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ແລະ ຫຼັກຖານໃນການດຳເນີນຄະດີອາຍາ

ຄັ້ງວັນທີ 11 – 13 ກຸມພາ 2020
ທີ່ ຫໍປະຊຸມແຫ່ງຊາດ
ນະຄອນຫຼວງວຽງຈັນ



ຮ່ວມຈັດໂດຍ :
ອົງການໄອຍະການປະຊາຊົນສູງສຸດ (OSPP)
ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ (ILSTA)

# ບົດນຳ



ອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ເປັນໄພຂົ່ມຂູ່ຕໍ່ຄວາມໝັ້ນຄົງ, ສະຖຽນລະພາບ ແລະ ການພັດທະນາເສດຖະກິດ - ສັງຄົມຂອງບັນດາປະເທດໃນພາກພື້ນ ແລະ ໃນໂລກ ໂດຍສະເພາະອາຊະຍາກຳການຟອກເງິນ, ການຄ້າຂາຍຢາເສບຕິດ, ການຄ້າມະນຸດ ເຊິ່ງໄດ້ສົ່ງຜົນກະທົບ ແລະ ສ້າງຄວາມເສຍຫາຍຢ່າງຮ້າຍແຮງຕໍ່ຊີວິດ, ຊັບສິນ ແລະ ກີດໜ່ວງຖ່ວງດຶງການພັດທະນາເສດຖະກິດ - ສັງຄົມຂອງພວກເຮົາ. ເພື່ອຕໍ່ສູ້ກັບສິ່ງເຫຼົ່ານີ້ ມັນຮຽກຮ້ອງໃຫ້ພວກເຮົາຕ້ອງມີມາດຕະການປ້ອງກັນ ແລະ ສະກັດກັ້ນທີ່ເຂັ້ມແຂງ ໂດຍມີກົນໄກການຮ່ວມມືທີ່ມີປະສິດທິຜົນລະຫວ່າງບັນດາໜ່ວຍງານລະດັບຊາດ ແລະ ບັນດາປະເທດ.

ໂດຍເຫັນໄດ້ຄວາມສຳຄັນໃນການຮ່ວມມືຕ້ານ ແລະ ສະກັດກັ້ນອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ໂດຍສະເພາະແມ່ນການຟອກເງິນ ທີ່ເກີດຂຶ້ນ ແລະ ແຜ່ຫຼາຍໃນທົ່ວໂລກ, ລັດຖະບານແຫ່ງ ສປປ ລາວ ໄດ້ສ້າງຕັ້ງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ (ຄຕມຊ) ແລະ ຄະນະກຳມະການແຫ່ງຊາດເພື່ອຕ້ານການຟອກເງິນ ແລະ ສະໜອງທຶນໃຫ້ແກ່ຜູ້ກໍ່ການຮ້າຍ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ທີ່ມີສິດອຳນາດຕາມກົດໝາຍໃນການແກ້ໄຂບັນຫາຕາມຂະບວນຍຸຕິທຳ ເປັນຕົ້ນ ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ), ອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງຍຸຕິທຳ ແນໃສ່ເຮັດໃຫ້ການແກ້ໄຂບັນຫາອາຊະຍາກຳທີ່ເກີດຂຶ້ນ ຢ່າງມີປະສິດທິຜົນ. ໃນປີ 2020 ນີ້ ສປປ ລາວ ກຳລັງຊຸ້ມຂ້ຽວກະກຽມສຳລັບການປະເມີນຮອບດ້ານ ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (2020 - 2021).

ອົງການໄອຍະການປະຊາຊົນສູງສຸດ ໂດຍໄດ້ຮັບການສະໜັບສະໜູນຈາກ ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການແຫ່ງ ຣາຊະອານາຈັກ ລຸກຊຳບວກ ໄດ້ຈັດກອງປະຊຸມ “ສ້າງຄວາມເຂັ້ມແຂງ ໃນການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງໂດຍສະເພາະແມ່ນບັນຫາການຟອກເງິນ, ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ແລະ ຫຼັກຖານໃນການດຳເນີນຄະດີອາຍາ” ປະຈຳປີ 2020 ຂຶ້ນ ໃນລະຫວ່າງວັນທີ 11 ຫາ 13 ກຸມພາ 2020 ທີ່ຫໍປະຊຸມແຫ່ງຊາດ ນະຄອນຫຼວງວຽງຈັນ, ໂດຍ ມີຜູ້ຕາງໜ້າຈາກບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງ ເຂົ້າຮ່ວມຫຼາຍກ່ວາ 170 ທ່ານ.

ການຈັດກອງປະຊຸມຄັ້ງນີ້ ເປັນຂີດໝາຍອັນສຳຄັນ ແລະ ເປັນການສ້າງຂີດຄວາມສາມາດໃຫ້ແກ່ພະນັກງານ ໃນຂົງເຂດອົງການໄອຍະການປະຊາຊົນ, ສານປະຊາຊົນ, ກະຊວງຍຸຕິທຳ, ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງເພື່ອແລກປ່ຽນຖອດຖອນບົດຮຽນເຊິ່ງກັນ ແລະ ກັນ, ສ້າງກົນໄກການປະສານງານຮ່ວມມືທີ່ມີປະສິດທິຜົນ ລວມທັງສ້າງຄວາມຮັບຮູ້ ແລະ ເຂົ້າໃຈເລິກເຊິ່ງຕໍ່ການປະຕິບັດກົດໝາຍ ແລະ ກຽມພ້ອມປະກອບສ່ວນຕາມພາລະບົດບາດ ແລະ ໜ້າທີ່ ຂອງຕົນເຂົ້າໃນ ການປະເມີນຮອບດ້ານ ວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (AML/CFT) ຢູ່ ສປປ ລາວ.

ກອງປະຊຸມລັກສະນະນີ້ແມ່ນຍັງໄດ້ສືບຕໍ່ຈັດຕັ້ງປະຕິບັດຢູ່ຂັ້ນທ້ອງຖິ່ນຂອງບັນດາແຂວງພາກເໜືອ, ພາກກາງ ແລະ ພາກໃຕ້ ເຊິ່ງໄດ້ເຊື້ອເຊີນບັນດາເຈົ້າໜ້າທີ່ຈາກອົງການຈັດຕັ້ງທີ່ກ່ຽວຂ້ອງເຂົ້າຮ່ວມ, ທັງນີ້ກໍເພື່ອເປັນການສືບຕໍ່ເຜີຍແຜ່ ແລະ ເປີດໂອກາດໃຫ້ຜູ້ເຂົ້າຮ່ວມໄດ້ແລກປ່ຽນຄວາມຮູ້, ບົດຮຽນ ແລະ ປະສົບການໃນການຕ້ານ ແລະ ສະກັດກັ້ນອາຊະຍາກຳຂ້າມຊາດ ແລະ ສົ່ງເສີມການຮ່ວມມືທີ່ດີກັບບັນດາຄູ່ຮ່ວມງານທັງພາຍໃນ ແລະ ສາກົນ. ຂ້າພະເຈົ້າເຊື່ອໝັ້ນວ່າ ຜ່ານກອງປະຊຸມລັກສະນະນີ້ຈະເປັນການຍົກສູງຂີດຄວາມສາມາດຂອງບັນດາເຈົ້າໜ້າທີ່ທີ່ກ່ຽວຂ້ອງ ແລະ ປັບປຸງກົນໄກການປະສານງານທີ່ດີຕື່ມອີກ, ເພື່ອປະກອບສ່ວນເຮັດໃຫ້ການຕ້ານ ແລະ ສະກັດກັ້ນອາຊະຍາກຳຂ້າມຊາດ ມີປະສິດທິຜົນດີກວ່າເກົ່າ.

ຂ້າພະເຈົ້າຂໍຖືໂອກາດນີ້ສະແດງຄວາມຂອບໃຈເປັນຢ່າງສູງມາຍັງ ລັດຖະບານແຫ່ງຣາຊະອານາຈັກລຸກຊຳບວກ ສຳລັບການສະໜັບສະໜູນອັນມີຄ່າໃນການຈັດກອງປະຊຸມຄັ້ງນີ້ ແລະ ຂໍຂອບໃຈມາຍັງ ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ ສຳລັບການຮ່ວມມືທີ່ຫ້າວຫັນໃນການຈັດກອງປະຊຸມລະດັບປະເທດ ແລະ ກອງປະຊຸມໃນຂັ້ນທ້ອງຖິ່ນຂອງບັນດາແຂວງໃນທົ່ວປະເທດ ພ້ອມທັງການຈັດພິມບົດລາຍງານກອງປະຊຸມໃນຄັ້ງນີ້.

ພະນະທ່ານ ຄຳສານ ສຸວົງ
ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສປປ ລາວ

# ສາລະບານ

| ***ການກ່າວຄຳໂອວາດ*** | ***ມື້ທີ 1, ວັນອັງຄານ ທີ 11 ກຸມພາ, 2020*** |
|---|---|
| ອົງການໄອຍະການປະຊາຊົນສູງສຸດ | ຫົວໜ້າກົມກວດກາການດຳເນີນຄະດີອາຍາ<br>ທ່ານ ຈັນທີ ໂປລີວັນ |
| ສະຖານທູດ ລຸກຊຳບວກ ປະຈຳ ສປປ ລາວ | ອຸປະທູດ<br>ພະນະທ່ານ ແຊມ ເຊຣນເນີ |
| ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ | ປະທານ ສະຖາບັນ<br>ທ່ານ ຣີຊາດ ຟີລິບປາດ |
| ***ຫົວຂໍ້ການນຳສະເໜີ*** | |
| 1. ອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ໃນຂົງເຂດອາຊີຕາເວັນອອກສຽງໃຕ້: ວິວັດທະນາການ, ການເຕີບໂຕ ແລະ ຜົນກະທົບ | ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ (UNODC), ຫົວໜ້າແຜນງານ ປະຈຳປະເທດ,<br>ທ່ານ ເອີເລນດ໌ ຟາລຈ໌ |
| 2. ປະເພດຂອງອາຊະຍາກຳ ແລະ ອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ | ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ<br>ທ່ານ ຈອນ ຄອນນໍລີ & ທ່ານ ຄິທ໌ ຟາກູຮາຊັນ |
| 3. ເສດຖະກິດຂອງອາຊະຍາກຳທີ່ມີການຈັດຕັ້ງ | ສູນການສຶກສາປະຊາທິປະໄຕ, ປະເທດບູນກາລີ<br>ນັກວິເຄາະ, ແຜນງານດ້ານຄວາມປອດໄພ<br>ທ່ານ ມາຣຽນ ຊາເບບ |
| 4. ຫຼັກຖານໃນການດຳເນີນຄະດີອາຍາ | ອົງການໄອຍະການສູງສຸດ<br>ຮອງຫົວໜ້າກົມກວດກາຄະດີອາຍາ,<br>ທ່ານ ສຸພາສິດ ລໍວັນໄຊ |
| 5. ການສືບສວນ-ສອບສວນການຟອກເງິນ, ຫຼັກຖານຕາມສະຖານະການ ແລະ ຫຼັກຖານທາງອ້ອມ | ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ,<br>ທ່ານ ທອມ ແຮນເຊັນ<br>ອົງການສະຫະປະຊາຊາດເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ, ທ່ານ ຄຣິສ ແບັດ |
| 6. ສະພາບອາຊະຍາກຳການຟອກເງິນ ຢູ່ ສປປ ລາວ ແລະ ບົດບາດຂອງໜ່ວຍງານສືບສວນທາງດ້ານການເງິນ | ທະນາຄານແຫ່ງ ສປປ ລາວ, ສຳນັກງານຂໍ້ມູນຕ້ານການຟອກເງິນ (ສຕຟງ), ຫົວໜ້າ ສຕຟງ<br>ທ່ານ ນາງ ແພງສີ ແພງເມືອງ |
| 7. ບົດບາດ ແລະ ສິດອຳນາດຂອງ ສຳນັກງານປ້ອງກັນ ແລະ ປາບປາມການຟອກເງິນ (ປປງ) ແຫ່ງ ປະເທດໄທ | ສຳນັກງານປ້ອງກັນ ແລະ ປາບປາມການຟອກເງິນ ແຫ່ງປະເທດໄທ, ເຈົ້າໜ້າທີ່ສືບສວນ-ສອບສວນຂັ້ນອາວຸໂສ,<br>ທ່ານ ນາງ ສິຣິຣັດ ຣັດຕະນະມົງຄົນສັກ |
| ***ຫົວຂໍ້ການນຳສະເໜີ*** | ***ມື້ທີ 2, ວັນພຸດ ທີ 12 ກຸມພາ, 2020*** |
| 8. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ທາງດ້ານກົດໝາຍ | ອົງການໄອຍະການສູງສຸດ ແຫ່ງປະເທດໄທ,<br>ກົມຮ່ວມມືຕ່າງປະເທດ, ຮອງຫົວໜ້າກົມ,<br>ທ່ານ ຈຸມພົນ ພັນສຳຣິດ |
| 9. ເງິນດິຈິຕອລ (Cryptocurrencies) | ສະຖາບັນ Kaufold & Reivellaud, ລຸກຊຳບວກ,<br>ທະນາຍຄວາມ/ທີ່ປຶກສາດ້ານກົດໝາຍ,<br>ທ່ານ ເຈຟ ບຣອນ |

| | |
|---|---|
| 10. ນະໂຍບາຍດ້ານການຕ້ານອາຊະຍາກຳ ແລະ ການປ້ອງກັນອາຊະຍາກຳ | ມະຫາວິທະຍາໄລ ລຸກຊຳບວກ,<br>ສາສະດາຈານ ສະເຕຟານ ບຣັມ |
| 11. ນຳສະເໜີກ່ຽວກັບ ການຈຳລອງສະຖານະການຕັດສິນຄະດີໃນສານ (ສານຈຳລອງ) | ມະຫາວິທະຍາໄລ ລຸກຊຳບວກ,<br>ສາສະດາຈານ ສະເຕຟານ ບຣັມ |
| 12. ສານຈຳລອງ – ຄະດີທີ 1 | ຜູ້ສະແດງ:<br>ຜູ້ພິພາກສາ: ດຣ. ຣາເຈີ ຣູດີ<br>ໄອຍະການ: ດຣ. ລໍເຣນຊ໌ ຊີຣີ<br>ທະນາຍຝ່າຍຈຳເລີຍ: ທ່ານ ແມັກຊ໌ ມູເລີ<br>ຈ່າສານ: ດຣ. ເພີຣິນ ຊີມອນ<br>ຈຳເລີຍ: ທ່ານ ດຣ. ລັດດາວັນ ດອນແກ້ວດາວົງ |
| 13. ສານຈຳລອງ – ຄະດີທີ 2 | ຜູ້ສະແດງ:<br>ຜູ້ພິພາກສາ: ດຣ. ຣາເຈີ ຣູດີ<br>ໄອຍະການ: ດຣ. ລໍເຣນຊ໌ ຊີຣີ<br>ທະນາຍຝ່າຍຈຳເລີຍ: ທ່ານ ແມັກຊ໌ ມູເລີ<br>ຈ່າສານ: ດຣ. ເພີຣິນ ຊີມອນ<br>ຈຳເລີຍ: ນາງ ມຸກທິດາ ສຸພັນທະຈິດ |
| ***ຫົວຂໍ້ການນຳສະເໜີ*** | ***ມື້ທີ 3, ວັນພະຫັດ ທີ 13 ກຸມພາ, 2020*** |
| 14. ຄວາມສຳຄັນຂອງຫຼັກຖານໃນການດຳເນີນຄະດີອາຍາ | ມະຫາວິທະຍາໄລ ລຸກຊຳບວກ,<br>ດຣ. ເພີຣິນ ຊີມອນ |
| 15. ການສະກັດກັ້ນການສະໜອງທຶນໃຫ້ແກ່ ການກໍ່ການຮ້າຍ (CFT) ແລະ ຂອບວຽກຂອງສະຫະປະຊາຊາດ | ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ,<br>ທ່ານ ຣິກ ພາວເວີ |
| 16. ຂໍ້ສະເໜີແນະ ຈາກກອງປະຊຸມ | ຄະນະປະທານ:<br>ທ່ານ ຈັນທີ ໂປລີວັນ, ຮອງການໄອຍະການສູງສຸດ<br>ທ່ານ ຣິຊາດ ຟີລິບປາດ, ສະຖາບັນ ILSTA |
| 17. ມອບລາງວັນໃຫ້ຜູ້ຊະນະເລີດ ການຕອບຄຳຖາມຄວາມຮູ້ທົ່ວໄປທາງກົດໝາຍ:<br>ຜູ້ຊະນະ: ທ່ານ ໄຊພອນ ສີສຸພັນ, ນະຄອນຫຼວງວຽງຈັນ, ຄະນະກຳມະການແຫ່ງຊາດເພື່ອກວດກາ ແລະ ຄວບຄຸມຢາເສບຕິດ | ທ່ານ ຈັນທີ ໂປລີວັນ, ຮອງການໄອຍະການສູງສຸດ<br>ທ່ານ ແຊມ ເຊຣນເນີ, ສະຖານທູດລຸກຊຳບວກ<br>ທ່ານ ຣິຊາດ ຟີລິບປາດ, ສະຖາບັນ ILSTA |

# ການກ່າວຄຳໂອວາດ

## ທ່ານ ຈັນທີ ໂປລິວັນ

ຫົວໜ້າກົມກວດກາຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສປປ ລາວ



ທ່ານ ຈັນທີ ກ່າວຕ້ອນຮັບບັນດາຜູ້ເຂົ້າຮ່ວມກອງປະຊຸມປະຈຳປີ 2020 ແລະ ຫວັງວ່າກອງປະຊຸມຈະປະສົບຜົນສຳເລັດຢ່າງຈົບງາມ. ທ່ານກ່າວວ່າ ອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ເປັນໄພຂົ່ມຂູ່ຕໍ່ຊີວິດ, ຊັບສິນຂອງປະຊາຊົນ, ການເມືອງ ແລະ ການພັດທະນາເສດຖະກິດ-ສັງຄົມ ຂອງບັນດາປະເທດໃນພາກພື້ນ ແລະ ທົ່ວໂລກ. ໃນຍຸກແຫ່ງໂລກາພິວັດ, ອາຊະຍາກຳຂ້າມຊາດ ບໍ່ພຽງແຕ່ເກີດຂຶ້ນຢູ່ພາຍໃນປະເທດໃດໜຶ່ງສະເພາະ ແຕ່ມັນເກີດຂຶ້ນຢູ່ໃນທຸກໆປະເທດ. ກຸ່ມອາຊະຍາກອນໄດ້ສວຍໃຊ້ໂອກາດຂອງການຈະເລີນເຕີບໂຕທາງການຄ້າ, ການລົງທຶນ ແລະ ການແລກປ່ຽນຂໍ້ມູນຂ່າວສານ ຊຶ່ງບໍ່ພຽງແຕ່ມີຜົນກະທົບຕໍ່ຊີວິດຂອງປະຊາຊົນ ແຕ່ຍັງແຊກແຊງເຂົ້າໃນກິດຈະການຂອງບັນດາບໍລິສັດຂ້າມຊາດ ແລະ ອົງການຈັດຕັ້ງຂອງລັດຖະບານໃນທົ່ວໂລກ.

ເພື່ອຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ໂດຍສະເພາະອາຊະຍາກຳການຟອກເງິນ, ລັດຖະບານແຫ່ງ ສປປ ລາວ ໄດ້ປະກາດນຳໃຊ້ກົດໝາຍວ່າດ້ວຍການຕ້ານ, ສະກັດກັ້ນການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ສະບັບເລກທີ 50/ສພຊ, ລົງວັນທີ 21 ກໍລະກົດ 2014; ປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017; ກົດໝາຍວ່າດ້ວຍການດຳເນີນຄະດີອາຍາສະບັບປັບປຸງ ເລກທີ 37/ສພຊ, ລົງວັນທີ 14 ພະຈິກ 2017 ແລະ ບັນດາຄຳສັ່ງ, ຄຳແນະນຳ ທີ່ກ່ຽວຂ້ອງກັບການຕ້ານ ແລະ ສະກັດກັ້ນການຟອກເງິນ ແລະ ການດຳເນີນຄະດີຕໍ່ຜູ້ກະທຳຜິດ. ໃນທ້າຍປີ 2019, ລັດຖະບານລາວ ໄດ້ອອກຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະສະເພາະກິດ ດ້ານວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເພື່ອກະກຽມສຳລັບການປະເມີນຜົນຮອບດ້ານ ໂດຍກຸ່ມຕໍ່ຕ້ານການຟອກເງິນ ອາຊີ-ປາຊີຟິກ ທີ່ຈະມີຂຶ້ນໃນ ສປປ ລາວ ໃນລະຫວ່າງ ປີ 2020-2021.

## ພະນະທ່ານ ແຊມ ເຊຣນເນີ

ອຸປະທູດ, ສະຖານທູດລຸກຊຳບວກ ປະຈຳ ສປປ ລາວ



ທ່ານ ເຊຣນເນີ ກ່າວວ່າ ການປະກາດນຳໃຊ້ປະມວນກົດໝາຍອາຍາ ເປັນຂີດໝາຍສຳຄັນໜຶ່ງໃນການພັດທະນາ ລັດແຫ່ງກົດໝາຍພາຍໃນປະເທດ ແລະ ສິ່ງດັ່ງກ່າວນີ້ເປັນເປົ້າໝາຍສະໜັບສະໜູນໜຶ່ງຂອງລຸກຊຳບວກ. ທ່ານສະແດງຄວາມຮັບຮູ້ວ່ານີ້ອາດເປັນຂະບວນການທີ່ທ້າທາຍໃນບັນດາປະເທດກຳລັງພັດທະນາຄື ສປປ ລາວ ທ່ານກ່າວຂອບໃຈສະຖາບັນ ILSTA ສຳລັບການສະໜັບສະໜູນຄວາມຊ່ຽວຊານຂອງຕົນທາງດ້ານນີ້. ທ່ານ ເຊຣນເນີ ກ່າວເນັ້ນວ່າ ໃນຂະນະທີ່ ພົນລະເມືອງ ແລະ ເສດຖະກິດຂອງລາວ ກຳລັງມີການເຕີບໂຕຢ່າງໝັ້ນຄົງ, ສປປ ລາວ ຈະປະເຊີນຄວາມທ້າທາຍໃນການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ແລະ ຕ້ອງມີຊັບພະຍາກອນ, ຄວາມສາມາດສະເພາະ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ກອງປະຊຸມນີ້ ເປັນເວທີສຳຄັນເພື່ອໃຫ້ຄວາມຮູ້, ບົດຮຽນໃນການຈັດຕັ້ງປະຕິບັດທີ່ດີໃນການຕ້ານອາຊະຍາກຳທີ່ມີການຈັດຕັ້ງ, ການຟອກເງິນ ແລະ ອາຊະຍາກຳອື່ນໆ. ທ່ານ ເຊຣນເນີ ສະແດງຄວາມຍິນດີທີ່ລຸກຊຳບວກ ສາມາດໃຫ້ຄວາມຊ່ວຍເຫຼືອໃນການບັນລຸຈຸດປະສົງເຫຼົ່ານີ້.

## ທ່ານ ຣິຊາດ ຟິລິບປາດ

ປະທານ ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ (ILSTA)



ທ່ານ ຟິລິບປາດ ກ່າວຕ້ອນຮັບຜູ້ເຂົ້າຮ່ວມສູ່ກອງປະຊຸມແຫ່ງຊາດປະຈໍາປີ 2020 ຊຶ່ງເປັນກອງປະຊຸມປະຈໍາປີ ຄັ້ງທີ 4. ນີ້ເປັນກອງປະຊຸມ ກ່ຽວກັບວຽກງານ ຕ້ານກິດຈະກໍາຂອງອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ ເຊັ່ນ: ໂດຍສະເພາະ ບັນຫາການຟອກເງິນ, ການຄ້າມະນຸດ, ຢາເສບຕິດທີ່ຜິດກົດໝາຍ, ການລັກລອບຕັດໄມ້ ແລະ ຄ້າຂາຍສັດປ່າ; ການຕ້ານອາຊະຍາກໍາເຫຼົ່ານີ້ເປັນສິ່ງສໍາຄັນສໍາລັບການພັດທະນາທີ່ມີຄວາມຍືນຍົງ.

ປະເທດທີ່ກໍາລັງພັດທະນາ ມີຄວາມສ່ຽງສະເພາະ ຕໍ່ອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ ຊຶ່ງເປັນບ່ອນທໍາລາຍໂຄງສ້າງຂອງລັດ, ເຮັດໃຫ້ຄວາມປອດໄພຂອງມະນຸດຕົກຢູ່ໃນຄວາມສ່ຽງ ແລະ ສ້າງຄວາມທ້າທາຍຕໍ່ການບັນລຸຈຸດປະສົງຂອງການພັດທະນາຂອງຊາດ. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ມີຄວາມສໍາຄັນໃນການເສີມສ້າງຄວາມຮ່ວມມືລະຫວ່າງບັນດາປະເທດ ໃນການຕໍ່ສູ້ກັບກຸ່ມອາຊະຍາກອນທີ່ມີການຈັດຕັ້ງ. ການເພີ່ມທະວີຂຶ້ນ ໃນການແລກປ່ຽນຂໍ້ມູນຂ່າວສານ, ການແລກປ່ຽນຂໍ້ມູນຂ່າວກອງລະຫວ່າງໜ່ວຍງານ, ການຮັບປະກັນທາງດ້ານຫຼັກຖານ, ການຍຶດ ແລະ ຮິບຊັບສິນ, ລາຍໄດ້ຈາກອາຊະຍາກໍາ ແມ່ນວິທີການໜຶ່ງທີ່ມີປະສິດທິຜົນ ໃນການຂັດຂວາງ ແລະ ຍຸຕິກິດຈະກໍາທີ່ຜິດກົດໝາຍ. ບັນດາໜ່ວຍງານບັງຄັບໃຊ້ກົດໝາຍ ຕ້ອງມີເຕັກໂນໂລຊີດ້ານການສືບສວນ-ສອບສວນທີ່ທັນສະໄໝ ແລະ ທັນກັບສະຖານະການ ເນື່ອງຈາກວ່າກຸ່ມອາຊະຍາກອນໄດ້ມີການພັດທະນາ ແລະ ປັບປ່ຽນຮູບແບບວິທີຂອງພວກເຂົາ ເພື່ອຫຼົບຫຼີກການກວດຈັບ.

ໃນປີ 2019 ສະຖາບັນ ILSTA ໄດ້ສະໜັບສະໜູນການຈັດກອງປະຊຸມວິຊາການຫຼາຍຄັ້ງໃນທຸກພາກ ຂອງປະເທດ ຊຶ່ງມີຜູ້ໄດ້ຮັບຜົນປະໂຫຍດຫຼາຍກ່ວາ 2,000 ຄົນ ຊຶ່ງເປັນການສົ່ງເສີມການປະສານງານລະຫວ່າງບັນດາໜ່ວຍງານທີ່ສໍາຄັນ. ສືບເນື່ອງຈາກກອງປະຊຸມລະດັບຊາດ ໄດ້ມີການຈັດກອງປະຊຸມລະດັບພາກຂຶ້ນສໍາລັບບັນດາແຂວງພາກເໜືອ, ກາງ ແລະ ໃຕ້ ເພື່ອເປັນການຜັນຂະຫຍາຍຜົນໄດ້ຮັບຂອງກອງປະຊຸມແຫ່ງຊາດ ແລະ ຮັບປະກັນວ່າ ການຊ່ວຍເຫຼືອຂອງສະຖາບັນ ILSTA ໄດ້ເຂົ້າເຖິງຜູ້ທີ່ມີສ່ວນກ່ຽວຂ້ອງທັງໃນຂັ້ນສູນກາງ ແລະ ທ້ອງຖິ່ນ. ທ່ານ ຟິລິບປາດ ກ່າວຂອບໃຈ ຜູ້ເຂົ້າຮ່ວມຈາກບັນດາກະຊວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງໃນປະເທດລາວ, ບັນດາຕົວແທນ ແລະ ຜູ້ບັນຍາຍຈາກອົງການຈັດຕັ້ງສາກົນ ແລະ ເພີ່ນຍັງໄດ້ກ່າວຂອບໃຈຕໍ່ກະຊວງການເງິນ ຂອງປະເທດລຸກຊໍາບວກ ແລະ ອົງການ ລຸກຊໍາບວກເພື່ອການພັດທະນາ ສໍາລັບການສະໜັບສະໜູນຂອງພວກເຂົາ.



## ທ່ານ ເອີເລນດ໌ ຟາລຈ໌

ຫົວໜ້າແຜນງານ, ອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ

"ອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ໃນຂົງເຂດອາຊີຕາເວັນອອກສຽງໃຕ້: ວິວັດທະນາການ, ການເຕີບໂຕ ແລະ ຜົນກະທົບ"



ທ່ານ ຟາລຈ໌ ນຳສະເໜີສິ່ງທີ່ພົບເຫັນພົ້ນເດັ່ນຈາກການປະເມີນສະຖານະການອາຊະຍາກຳທີ່ມີການຈັດຕັ້ງ (TOCTA) ປະຈຳປີ 2019 ຂອງອົງການ UNODC ສຳລັບອາຊີຕາເວັນອອກສຽງໃຕ້ ໂດຍເນັ້ນໃສ່ອາຊະຍາກຳທີ່ມີການຈັດຕັ້ງປະເພດ ຫຼັກກ່ຽວກັບ ຢາເສບຕິດ, ມະນຸດ, ສິ່ງແວດລ້ອມ ແລະ ສິນຄ້າ. ປັດໄຈເອື້ອອຳນວຍແກ່ ວິວັດທະນາການການເຕີບໂຕຂອງອາຊະຍາກຳທີ່ມີການຈັດຕັ້ງໃນພາກພື້ນ. ແນວໂນ້ມສຳຄັນສອງຢ່າງໃນອາຊະຍາກຳຢາເສບຕິດຄື: ອັນທີໜຶ່ງ, ການຄ້າເຮໂຣອິນໃນພາກພື້ນມີລັກສະນະຫຼຸດລົງ ໃນແງ່ຂອງການຜະລິດ, ການຄ້າຂາຍ ແລະ ການບໍລິໂພກ, ໃນຂະນະທີ່ການຄ້າຂາຍຢາບ້າ ເພີ່ມຂຶ້ນເຖິງ 300% ເມື່ອປຽບທຽບໃນໄລຍະສິບສອງປີ ຜ່ານມາ. ປັດໄຈຂັບເຄື່ອນຕົ້ນຕໍສຳລັບການເພີ່ມຂຶ້ນຢ່າງໄວວາໃນຕະຫຼາດຄ້າຢາບ້າ ໃນອາຊີຕາເວັນອອກສຽງໃຕ້ແມ່ນເນື່ອງມາຈາກການປາບປາມໂຮງງານຜະລິດຢາບ້າປິດລັບ ໃນປະເທດຈີນ ເຮັດໃຫ້ກຸ່ມອາຊະຍາກຳທີ່ມີການຈັດຕັ້ງຢູ່ຈີນ ຍ້າຍຖານຜະລິດມາທາງພາກເໜືອ ແລະ ຕາເວັນອອກຂອງ ມຽນມ້າ. ດ້ວຍເຫດນີ້, ການລັກລອບລຳລຽງຂົນສົ່ງຢາບ້າຈາກມຽນມ້າ ຜ່ານປະເທດລາວໄປສູ່ຕະຫຼາດອື່ນໆໃນພາກພື້ນ ຈຶ່ງມີທ່າອ່ຽງເພີ່ມຂຶ້ນ.

70% ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນປະເທດໄທ ແມ່ນຖືກຂູດຮີດທາງເພດ, ໃນຂະນະທີ່ 70% ຂອງຜູ້ຖືກເຄາະຮ້າຍເຫຼົ່ານັ້ນຍັງບໍ່ທັນບັນລຸນິຕິພາວະ. ສປປ ລາວ ກໍຄື ມຽນມ້າ, ກຳປູເຈຍ ແລະ ຫວຽດນາມ ແມ່ນປະເທດຕົ້ນທາງສຳລັບຜູ້ຖືກເຄາະຮ້າຍຂອງການຄ້າມະນຸດເພື່ອການຂູດຮີດທາງເພດ ໃນປະເທດໄທ. ເຊັ່ນດຽວກັນ, ສປປ ລາວ ຍັງເປັນປະເທດຕົ້ນທາງສຳລັບຜູ້ຖືກເຄາະຮ້າຍຂອງການຄ້າມະນຸດເພື່ອການຂູດຮີດທາງເພດ ໃນປະເທດຈີນ. ກ່ຽວກັບການລັກລອບຂົນສົ່ງແຮງງານຂ້າມຊາດ, ກຸ່ມອາຊະຍາກອນ ໄດ້ສະແຫວງຫາຜົນປະໂຫຍດຈາກຄວາມແຕກຕ່າງທາງດ້ານການພັດທະນາເສດຖະກິດ ແລະ ຄວາມຕ້ອງການແຮງງານລາຄາຖືກ ຊຶ່ງສົ່ງຜົນໃຫ້ມີມູນຄ່າການຄ້າຂາຍແຮງງານຂ້າມຊາດສູງເຖິງ 200 ລ້ານໂດລາໃນພາກພື້ນ. ສປປ ລາວ, ກຳປູເຈຍ ແລະ ມຽນມ້າ ເປັນປະເທດຕົ້ນທາງສຳລັບແຮງງານຂ້າມຊາດທີ່ຖືກລັກລອບຄ້າຂາຍ.




ອາຊະຍາກຳດ້ານສິ່ງແວດລ້ອມເຊັ່ນ: ການລັກລອບຄ້າຂາຍສັດປ່າ ແລະ ໄມ້ທ່ອນ ສະທ້ອນໃຫ້ເຫັນການເພີ່ມຂຶ້ນໃນການເຂົ້າເຖິງທົ່ວໂລກຂອງເຄືອຂ່າຍອາຊະຍາກອນທີ່ມີການຈັດຕັ້ງ, ມີການລັກລອບຂົນສົ່ງສິ່ງຕ້ອງຫ້າມເຊັ່ນ: ງາຊ້າງ ແລະ ນໍແຮດ ຈາກບັນດາປະເທດໃນທະວີບອາຟຣິກາ ເຂົ້າມາໃນພາກພື້ນ. ສັດປ່າຕ້ອງຫ້າມໃນທ້ອງຖິ່ນເຊັ່ນ: ລິ່ນ, ລີງ ແລະ ງູ ມັກຈະຖືກລັກລອບຄ້າຂາຍອອກນອກຂົງເຂດອາຊີຕາເວັນອອກສຽງໃຕ້. ການນຳໃຊ້ມາດຕະການຫ້າມການຄ້າຂາຍງາຊ້າງທີ່ຕະຫຼາດພາຍໃນຂອງປະເທດຈີນ ອາດສົ່ງຜົນກະທົບໄປຍັງບັນດາປະເທດເພື່ອນບ້ານ, ແລະ ມີຕົວບົ່ງຊີ້ໃຫ້ເຫັນວ່າມີການຈຳໜ່າຍຜະລິດຕະພັນງາຊ້າງເພີ່ມຂຶ້ນໃນບາງປະເທດ ເຊັ່ນ: ກຳປູເຈຍ ແລະ ລາວ.

ໃນຕອນທ້າຍ, ທ່ານ ຟາລຈ໌ ກ່າວວ່າ ຂໍ້ຕົກລົງການຄ້າຂ້າມແດນຂອງອາຊຽນ ຕ້ອງສອດຄ່ອງກັບການລົງທຶນດ້ານຄວາມໝັ້ນຄົງຂອງສາທາລະນະ. ເຊັ່ນດຽວກັນ, ເຂດເສດຖະກິດພິເສດໃນພາກພື້ນ ຈຳເປັນຕ້ອງມີລະບຽບຄຸ້ມຄອງ ເພື່ອຫຼີກລ້ຽງການສວຍໃຊ້ປະໂຫຍດໂດຍເຄືອຂ່າຍອາຊະຍາກອນທີ່ມີການຈັດຕັ້ງ. ມາດຕະການນີ້ສາມາດດຳເນີນການໄດ້ໂດຍນຳໃຊ້ກົນໄກຄວາມຮ່ວມມືລະຫວ່າງບັນດາປະເທດອາຊຽນທີ່ມີຢູ່ໃນປັດຈຸບັນ.

# ທ່ານ ຈອນ ຄອນນໍລີ ແລະ ທ່ານ ຄີທ໌ ຟາກູຮາຊັນ

ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ

"ປະເພດຂອງອາຊະຍາກຳ ແລະ ອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ"



ທ່ານ ຄອນນໍລີ ນຳສະເໜີພາບລວມຂອງອາຊະຍາກຳປະເພດຕ່າງໆ ໂດຍອ້າງອີງເຖິງປະມວນກົດໝາຍອາຍາຂອງ ສປປ ລາວ ສະບັບປີ 2017. ທ່ານ ຄອນນໍລີ ກ່າວເນັ້ນເຖິງຄວາມສຳຄັນຂອງຂໍ້ມູນ ແລະ ຄວາມຈຳເປັນສຳລັບວິທີການແບບເດີນໜ້າ ຂອງບັນດາໜ່ວຍງານບັງຄັບໃຊ້ກົດໝາຍ ຊຶ່ງເປັນທີ່ຮັບຮູ້ໃນນາມຮູບແບບ "ຂໍ້ມູນຂ່າວກອງ ນຳສູ່ການສືບສວນ-ສອບສວນ". ເພື່ອຕ້ານ, ສະກັດກັ້ນອາຊະຍາກຳທີ່ມີການຈັດຕັ້ງ, ເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ ຕ້ອງເຂົ້າໃຈວ່າ ຕະຫຼາດອາຊະຍາກຳ, ກຸ່ມອາຊະຍາກອນ ແລະ ກຸ່ມອາຊະຍາກອນທີ່ມີການຈັດຕັ້ງ (OCGs) ມີໂຄງສ້າງແນວໃດ ແລະ ພວກເຂົາມີການເຄື່ອນໄຫວແນວໃດ.

ອາຊະຍາກຳປະເພດທຳອິດແມ່ນ ອາຊະຍາກຳທີ່ໃຊ້ຄວາມຮຸນແຮງ, ທ່ານ ຄອນນໍລີ ກ່າວວ່າ ອາຊະຍາກຳປະເພດໃຊ້ຄວາມຮຸນແຮງ ມັກຈະຕິດຕາມດ້ວຍອາຊະຍາກຳອື່ນໆ ເຊັ່ນ: ການກະທຳຜິດກ່ຽວກັບ ການເຂົ້າ-ອອກເມືອງ, ການຂົ່ມຂູ່, ການບີບບັງຄັບ, ການສໍ້ລາດບັງຫຼວງ, ການຫຼີກລ່ຽງພາສີ ແລະ ການຟອກເງິນ ເນື່ອງຈາກວ່າ ກຸ່ມອາຊະຍາກອນທີ່ມີການຈັດຕັ້ງ ເລືອກທີ່ຈະໃຊ້ຄວາມຮຸນແຮງເພື່ອບັນລຸເປົ້າໝາຍຫຼັກຂອງພວກເຂົາ ກໍຄື ການສ້າງຄວາມຮັ່ງມີແບບຜິດກົດໝາຍ. ຕົວຢ່າງ ກໍລະນີການຄ້າມະນຸດ, ມັກຈະມີອາຊະຍາກຳທີ່ໃຊ້ຄວາມຮຸນແຮງສະເໝີ ເຊັ່ນ: ການທຳຮ້າຍຮ່າງກາຍ, ການລັກພາຕົວ, ການຄາດຕະກຳ, ການຂົ່ມຂືນ ຫຼື ທໍລະມານ.



ອາຊະຍາກຳທາງຊັບສິນ ປະກອບດ້ວຍ ການລັກຊັບ, ການລັກວາງເພີງ, ການໂຈລະກຳ ແລະ ການທຳລາຍສິ່ງຂອງ ໄດ້ຖືກຍົກຂຶ້ນນຳສະເໜີ ແລະ ອ້າງອີງໃສ່ມາດຕາ 231 - 236 ຂອງປະມວນກົດໝາຍອາຍາຂອງ ສປປ ລາວ. ໝວດທີ 8 ຂອງພາກທີ II ຂອງປະມວນກົດໝາຍອາຍາ ໄດ້ກວມເອົາອາຊະຍາກຳກ່ຽວກັບຢາເສບຕິດ ແລະ ໄດ້ກຳນົດຢ່າງຊັດເຈນວ່າເປັນການກະທຳຜິດທາງອາຍາ ສຳລັບ ການເພາະປູກ, ການຜະລິດ, ມີໄວ້ໃນຄອບຄອງ, ຈຳໜ່າຍ ແລະ ຂົນສົ່ງ ຢາເສບຕິດ. ເຖິງຢ່າງໃດກໍຕາມ, ສັງເກດໄດ້ວ່າ ການສະໜອງທຶນໃຫ້ແກ່ການຜະລິດ ແລະ ຈຳໜ່າຍຢາເສບຕິດ ບໍ່ຖືກລະບຸຢ່າງຈະແຈ້ງວ່າເປັນການກະທຳຜິດທາງອາຍາ.

ທ່ານ ຟາກູຮາຊັນ ໄດ້ນຳສະເໜີປະເພດຂອງອາຊະຍາກຳດ້ານສິ່ງແວດລ້ອມ ຊຶ່ງໄດ້ຍົກບັນຫາຂອງການຄ້າຂາຍສັດປ່າຢ່າງຜິດກົດໝາຍ, ການລັກລອບຕັດໄມ້ ແລະ ການຖິ້ມສິ່ງເສດເຫຼືອທີ່ເປັນອັນຕະລາຍຢ່າງຊະຊາຍ. ອາຊະຍາກຳດ້ານສິ່ງແວດລ້ອມ ໄດ້ຖືກກຳນົດໃນມາດຕາ 326 – 353 ຂອງປະມວນກົດໝາຍອາຍາ. ຕໍ່ການຄ້າຂາຍສັດປ່າທີ່ຜິດກົດໝາຍ, ນາຍົກລັດຖະມົນຕີຂອງ ສປປ ລາວ ໄດ້ອອກຄຳສັ່ງເລກທີ 5/ນຍ ໃນເດືອນ ພຶດສະພາ 2018 ຊຶ່ງຫ້າມການລ່າສັດປ່າ ແລະ ການຄ້າຂາຍຊີ້ນສ່ວນສັດປ່າ. ໃນເດືອນ ມີນາ 2019, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອອກຂໍ້ຕົກລົງສະບັບໜຶ່ງ ຊຶ່ງໄດ້ໃຫ້ຄຳແນະນຳກ່ຽວກັບການເຄື່ອນໄຫວ, ຄຸ້ມຄອງສວນສັດ ແລະ ຟາມສັດປ່າ.



ອາຊະຍາກຳທາງຄອມພິວເຕີ (Cybercrime) ເປັນການກະທຳຜິດທາງອາຍາໃນກໍລະນີທີ່ ຄອມພິວເຕີ/ແທັບເລັດ/ໂທລະສັບມືຖື ຖືກນຳໃຊ້ເປັນວັດຖຸ ແລະ/ຫຼື ເຄື່ອງມືຂອງອາຊະຍາກຳ. ມາດຕາ 164 – 174 ຂອງປະມວນກົດໝາຍອາຍາກຳນົດການເຂົ້າເຖິງໂຈລະກຳຂໍ້ມູນໂດຍບໍ່ໄດ້ຮັບອະນຸຍາດ ແລະ ອາຊະຍາກຳທາງການເງິນ ເປັນການກະທຳຜິດທາງອາຍາ. ອາຊະຍາກຳຄໍເສື້ອຂາວ (White-collar crimes) ມັກກະທຳຂຶ້ນໂດຍກຸ່ມຄົນທີ່ບໍ່ຢູ່ໃນພາບພົດດັ້ງເດີມຂອງອາຊະຍາກອນ; ພວກເຂົາເປັນຄົນມີການສຶກສາດີ ແລະ ແຕ່ງຕົວມີພູມຖານ; ການກໍ່ອາຊະຍາກຳບໍ່ໄດ້ອີງໃສ່ການໃຊ້ຄວາມຮຸນແຮງ ຫຼື ການນາບຂູ່ ແຕ່ກໍສາມາດສົ່ງຜົນກະທົບທາງດ້ານການເງິນຢ່າງໃຫຍ່ຫຼວງຕໍ່ສັງຄົມ. ນອກຈາກນີ້ ຍັງມີການສໍ້ລາດບັງຫຼວງ, ການສໍ້ໂກງຂອງນິຕິບຸກຄົນ ແລະ ການນຳໃຊ້ຂໍ້ມູນພາຍໃນເພື່ອຜົນປະໂຫຍດສ່ວນຕົວ. ທ່ານ ຟາກູຮາຊັນ ໄດ້ປິດທ້າຍດ້ວຍການສະເໜີໂດຍຫຍໍ້ກ່ຽວກັບ ການຟອກເງິນ, ການປິດບັງຄວາມເຊື່ອມໂຍງລະຫວ່າງອາຊະຍາກຳ ແລະ ລາຍໄດ້ຈາກອາຊະຍາກຳ ແລະ ການນຳໃຊ້ເພື່ອເປັນເຄື່ອງມືຂອງອາຊະຍາກຳທີ່ມີການຈັດຕັ້ງ.

## ທ່ານ ມາຣຽນ ຊາເບບ

ສູນການສຶກສາປະຊາທິປະໄຕ, ປະເທດບູນກາລີ

“ເສດຖະກິດຂອງອາຊະຍາກຳທີ່ມີການຈັດຕັ້ງ”



ທ່ານ ຊາເບບ ໄດ້ກ່າວເຖິງຜົນກະທົບອັນມະຫາສານ ແລະ ການແຜ່ຂະຫຍາຍຂອງອາຊະຍາກຳທີ່ມີການຈັດຕັ້ງໃນໂລກປະຈຸບັນ. ອາຊະຍາກຳທີ່ມີການຈັດຕັ້ງຕ້ອງນຳໃຊ້ຄ່າໃຊ້ຈ່າຍຫຼາຍພັນລ້ານໂດລາເຂົ້າໃນທຸລະກິດທີ່ຖືກກົດໝາຍ ຊຶ່ງມັນທຳລາຍຕະຫຼາດ ແລະ ເຮັດໃຫ້ເກີດຜົນກະທົບຢ່າງກວ້າງຂວາງຕໍ່ບຸກຄົນ, ລັດ ແລະ ສັງຄົມ. ເນື່ອງຈາກລັກສະນະຂ້າມຊາດຂອງອາຊະຍາກຳທີ່ມີການຈັດຕັ້ງ ມັນຈຳເປັນທີ່ຈະຕ້ອງມີວິທີການດຳເນີນຄະດີຢ່າງຮອບດ້ານ ພ້ອມທັງຄຳນຶງເຖິງບັນດາປັດໄຈເອື້ອອຳນວຍແກ່ການຂະຫຍາຍຕົວຂອງອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ.

ຄວາມເຂົ້າໃຈກ່ຽວກັບປະເພດຂອງອົງການຈັດຕັ້ງອາຊະຍາກຳເປັນສິ່ງສຳຄັນໃນການແຊກແຊງເຂົ້າໃນກິດຈະການຂອງພວກເຂົາ. ປະເພດທີ່ພົບເຫັນສ່ວນຫຼາຍແມ່ນ ອົງການຈັດຕັ້ງທີ່ມີໂຄງສ້າງເປັນລຳດັບຊັ້ນ ໂດຍມີຫົວໜ້າທີ່ມີອຳນາດສູງສຸດ ແລະ ໜ່ວຍງານບັນຊາການເປັນຂັ້ນຕາມລຳດັບ. ອົງການຈັດຕັ້ງອາຊະຍາກຳອື່ນໆ ຍັງໄດ້ນຳເອົາໂຄງສ້າງແບບເຄືອຂ່າຍມານຳໃຊ້ ເພື່ອທີ່ຈະສາມາດປັບຕົວເຂົ້າກັບສະພາບການປ່ຽນແປງອີກດ້ວຍ. ອົງການຈັດຕັ້ງກຸ່ມອາຊະຍາກອນລັບ ຫຼື ແບບມາເຟຍ ກໍເປັນອີກປະເພດໜຶ່ງທີ່ພົບເຫັນຢູ່ໃນພາກພື້ນຕ່າງໆຂອງໂລກ ເຊິ່ງສ່ວນໃຫຍ່ມັກຈະເປັນການຮ່ວມ ‘ສະມາຄົມເພື່ອອຳນາດອິດທິພົນ’ ຫຼາຍກວ່າກຸ່ມເຄືອຂ່າຍຫວັງຜົນກຳໄລ.

ກຸ່ມອາຊະຍາກອນທີ່ມີການຈັດຕັ້ງ (OCGs) ດຳເນີນກິດຈະການໃນຂະແໜງການຕ່າງໆຂອງເສດຖະກິດ ຊຶ່ງໂດຍທົ່ວໄປເອີ້ນວ່າ ຕະຫຼາດ. ເຖິງແມ່ນວ່າການລະບຸຕະຫຼາດ ແລະ ກິດຈະກຳແບບຜິດກົດໝາຍພຽງຢ່າງດຽວນີ້ ເປັນສິ່ງທີ່ຂ້ອນຂ້າງງ່າຍ, ແຕ່ກໍຕ້ອງຄຳນຶງວ່າ ເສັ້ນແບ່ງແຍກລະຫວ່າງ ຕະຫຼາດທີ່ຖືກກົດໝາຍ, ຕະຫຼາດສີເທົາ (ບໍ່ສາມາດລະບຸໄດ້) ແລະ ຕະຫຼາດທີ່ຜິດກົດໝາຍ ນັ້ນບໍ່ມີຄວາມຊັດເຈນສະເໝີໄປ. ທຸກໆຕະຫຼາດທີ່ຜິດກົດໝາຍມັກຈະມີຕ່ອງໂສ້ການສະໜອງໃນຕົວຂອງມັນເອງ ລວມທັງໂຄງສ້າງເພື່ອຕອບສະໜອງຄວາມຕ້ອງການ ແລະ ຜູ້ຊື້-ຂາຍປະຈຳ ແລະ ຍັງກ່ຽວຂ້ອງເຖິງຄວາມສ່ຽງສະເພາະ ແລະ ຜົນເສຍຫາຍທາງສັງຄົມນຳອີກດ້ວຍ.

ທ່ານ ຊາເບບ ໄດ້ລະບຸຕະຫຼາດທີ່ຜິດກົດໝາຍໃນພາກພື້ນອາຊີຕາເວັນອອກສຽງໃຕ້ ຊຶ່ງດຳເນີນໂດຍກຸ່ມອາຊະຍາກອນທີ່ມີການຈັດຕັ້ງພາຍໃນທ້ອງຖິ່ນ ແລະ ສາກົນ. ຕົວຢ່າງຂອງຕະຫຼາດເຫຼົ່ານີ້ໄດ້ແກ່ ການລັກລອບຂົນສົ່ງແຮງງານຂ້າມແດນ ແລະ ການຄ້າມະນຸດ ເພື່ອຈຸດປະສົງຂູດຮີດແຮງງານ ແລະ ທາງເພດ, ການຄ້າຂາຍຢາເສບຕິດ, ການລັກລອບຂົນສົ່ງສິ່ງເສດເຫຼືອແບບຜິດກົດໝາຍ ແລະ ການຄ້າຂາຍສັດປ່າ. ທ່ານໄດ້ກ່າວວ່າ ບັນດາຕະຫຼາດເຫຼົ່ານີ້ສ່ວນໃຫຍ່ຈະສາມາດເກີດຂຶ້ນໄດ້ ໂດຍຜ່ານການສໍ້ລາດບັງຫຼວງຂອງລັດຖະບານຢູ່ໃນຫຼາຍລະດັບ.

ສຳລັບການຈັບກຸມກຸ່ມອາຊະຍາກອນທີ່ມີການຈັດຕັ້ງ, ທ່ານ ຊາເບບ ໄດ້ເນັ້ນກ່ຽວກັບປະສິດທິພາບໃນການລະບຸກິດຈະກຳຂອງການຟອກເງິນທີ່ກຸ່ມອາຊະຍາກອນທີ່ມີການຈັດຕັ້ງພະຍາຍາມຊຸກເຊື່ອງທີ່ມາຂອງຄວາມຮັ່ງມີຂອງພວກເຂົາ. ການພັດທະນາຢ່າງວ່ອງໄວຂອງອິນເຕີເນັດ ແລະ ການສື່ສານທາງໂທລະສັບນຳໄປສູ່ການປ່ຽນແປງຮູບແບບວິທີການກໍ່ອາຊະຍາກຳ ຊຶ່ງສ່ວນໃຫຍ່ເປັນອາຊະຍາກຳປະເພດເດີມທີ່ກະທຳຂຶ້ນຜ່ານລະບົບຄອມພິວເຕີ. ໂດຍລວມແລ້ວ ເຕັກໂນໂລຊີການສື່ສານທີ່ທັນສະໄໝຖືເປັນວິທີການທີ່ມີປະສິດທິພາບທີ່ສຸດໃນການລິເລີ່ມ, ເອື້ອອຳນວຍ ແລະ ສືບຕໍ່ດຳເນີນກິດຈະການທີ່ຜິດກົດໝາຍໄດ້ຕໍ່ໄປຢ່າງບໍ່ຢຸດຢັ້ງ. ທ່ານ ຊາເບບ ໄດ້ສະຫຼຸບໂດຍກ່າວວ່າ ໃນຂະນະທີ່ຄວາມທັນສະໄໝທາງດ້ານເຕັກໂນໂລຊີເປັນຕົວເຊື່ອມຕໍ່ຂອງກຸ່ມອາຊະຍາກອນຂ້າມຊາດໃນການດຳເນີນກິດຈະການຂອງພວກເຂົາ, ສິ່ງດັ່ງກ່າວນີ້ກໍຍັງສາມາດນຳໃຊ້ເຂົ້າໃນວຽກງານປະຕິບັດກົດໝາຍ ໂດຍສະເພາະການກວດຈັບ ແລະ ການດຳເນີນຄະດີໄດ້ເຊັ່ນດຽວກັນ.



# ທ່ານ ສຸພາສິດ ລໍວັນໄຊ

ຮອງຫົວໜ້າກົມກວດກາຄະດີອາຍາ, ອົງການໄອຍະການສູງສຸດ

"ຫຼັກຖານໃນການດຳເນີນຄະດີອາຍາ"



ທ່ານ ສຸພາສິດ ໄດ້ນຳສະເໜີກ່ຽວກັບຄວາມສຳຄັນຂອງຫຼັກຖານໃນການດຳເນີນຄະດີອາຍາ ຊຶ່ງເພິ່ນໄດ້ເນັ້ນໜັກໃສ່ ແຫຼ່ງທີ່ມາຂອງຫຼັກຖານປະເພດຕ່າງໆ. ທ່ານກ່າວວ່າ ຈຸດປະສົງຂອງການນຳໃຊ້ຫຼັກຖານໃນຂັ້ນສານ ກໍເພື່ອສ້າງຫຼັກຖານພິສູດຄວາມຈິງຢູ່ໃນຄະດີ; ເພື່ອຢັ້ງຢືນວ່າການກະທຳຜິດທາງອາຍາໃດໜຶ່ງມີອົງປະກອບຄົບຖ້ວນສົມບູນ; ແລະ ມີສາເຫດທີ່ນຳໄປສູ່ການເພີ່ມ ຫຼື ຫຼຸດຜ່ອນໂທດທາງອາຍາບໍ່. ທ່ານໄດ້ນຳສະເໜີຮູບພາບພ້ອມຄຳອະທິບາຍກ່ຽວກັບ ຫຼັກຖານທັງສາມປະເພດຄື: ຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ ແລະ ຫຼັກຖານທາງບຸກຄົນ ຫຼື ຫຼັກຖານຈາກພະຍານແວດລ້ອມ.

ທ່ານ ສຸພາສິດ ອະທິບາຍວ່າ ຫຼັກຖານແຕ່ລະປະເພດສາມາດຖືກພົບ ແລະ ໄດ້ມາຈາກຫຼາຍແຫຼ່ງ. ຫຼັກຖານທາງດ້ານວັດຖຸອາດໄດ້ມາຈາກການຄົ້ນຕົວບຸກຄົນ, ເຄຫາສະຖານ, ຍານພາຫະນະ; ການຊັນນະສູດສະຖານທີ່ເກີດເຫດ, ຊາກຊົບ ຫຼື ຮ່ອງຮອຍຕ່າງໆ ແລະ ຈາກການພິສູດຊິ້ນສ່ວນຂອງຄົນ, ສັດ ແລະ ວັດຖຸສິ່ງຂອງອື່ນໆ. ຫຼັກຖານທາງດ້ານເອກະສານແມ່ນຫຼັກຖານທີ່ຖືກພົບ ແລະ ເກັບກຳໄດ້ຈາກ ການກວດຄົ້ນຕົວບຸກຄົນ, ເຄຫະສະຖານ, ແລະ ຍານພາຫະນະ. ນອກຈາກນີ້ແລ້ວ, ຫຼັກຖານທາງດ້ານເອກະສານອາດຈະໄດ້ຈາກການກວດຄົ້ນອຸປະກອນສື່ສານ ແລະ ສິ່ງພິມຕ່າງໆນຳອີກ. ສຳລັບແຫຼ່ງທີ່ມາຂອງຫຼັກຖານດ້ານບຸກຄົນແມ່ນມາຈາກ ການໃຫ້ການຂອງຜູ້ມີສ່ວນຮ່ວມໃນການດຳເນີນຄະດີ; ການໃຫ້ຄຳເຫັນຂອງຜູ້ຊ່ຽວຊານ; ການໃຫ້ການຂອງຜູ້ຖືກເຄາະຮ້າຍ, ຜູ້ເສຍຫາຍ, ພະຍານ, ຜູ້ທີ່ໄດ້ເຫັນ ແລະ/ຫຼື ໄດ້ສຳຜັດໃນເຫດການ ແລະ ການຊັນນະສູດສະຖານທີ່ເກີດເຫດ.



ໃນຕອນທ້າຍຂອງການນຳສະເໜີ ທ່ານ ສຸພາສິດ ໄດ້ອະທິບາຍໂດຍຫຍໍ້ກ່ຽວກັບ ພາລະບົດບາດຂອງ ສາມອົງການຈັດຕັ້ງຫຼັກ ທີ່ມີສິດ ແລະ ໜ້າທີ່ໃນການກວດກາ ແລະ ຊັ່ງຊາຕີລາຄາຫຼັກຖານ ເຊັ່ນ: ເຈົ້າໜ້າທີ່ຕຳຫຼວດ ແລະ ອົງການສືບສວນ-ສອບສວນອື່ນໆ, ອົງການໄອຍະການປະຊາຊົນສູງສຸດ ແລະ ສານປະຊາຊົນສູງສຸດ.

## ທ່ານ ຄຣິສ ແບັດ

ອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳ

"ການສືບສວນ-ສອບສວນ ການຟອກເງິນ, ຫຼັກຖານຕາມສະຖານະການ ແລະ ຫຼັກຖານທາງອ້ອມ"



ທ່ານ ແບັດ ໄດ້ນຳສະເໜີປະເດັນສຳຄັນກ່ຽວກັບຫຼັກຖານໃນການດຳເນີນຄະດີການຟອກເງິນ. ອາຊະຍາກອນທີ່ "ສະຫຼາດ" ຈະຊຸກເຊື່ອງ, ປ່ຽນຮູບ, ປອມແປງ ແລະ ເຄື່ອນຍ້າຍຜົນກຳໄລທີ່ຜິດກົດໝາຍທີ່ໄດ້ມາຈາກອາຊະຍາກຳຂອງພວກເຂົາເພື່ອຫຼົບຫຼີກເຈົ້າໜ້າທີ່. **ມາດຕາ 130** ຂອງ *ປະມວນກົດໝາຍອາຍາ ສະບັບປີ 2017* ຂອງ ສປປ ລາວ, ໂດຍສອດຄ່ອງຕາມຫຼັກການສາກົນ, ໄດ້ກຳນົດວ່າ ການຟອກເງິນ ແມ່ນ *"ການປ່ຽນຮູບ, ນຳໃຊ້, ເຄື່ອນຍ້າຍ, ແລກປ່ຽນ, ໄດ້ມາ, ຄອບຄອງ, ໂອນກຳມະສິດທີ່ແທ້ຈິງຂອງເງິນ ຫຼື ຊັບສິນອື່ນທີ່ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ຮູ້ ຫຼື ສົງໄສ ວ່າ ເງິນ ຫຼື ຊັບສິນນັ້ນມາຈາກການກະທຳຜິດຕົ້ນ ເພື່ອປົກປິດ, ຊຸກເຊື່ອງຄຸນລັກສະນະທີ່ມາຂອງເງິນ, ທີ່ຕັ້ງຂອງຊັບສິນ ເພື່ອເຮັດໃຫ້ເງິນ ຫຼື ຊັບສິນດັ່ງກ່າວຖືກຕ້ອງຕາມກົດໝາຍ."*

ສິ່ງທີ່ຍາກສຳລັບໜ່ວຍງານບັງຄັບໃຊ້ກົດໝາຍ ກໍຄື ການພິສູດວ່າ ຜູ້ຖືກສົງໄສ ໄດ້ກະທຳການຟອກເງິນ ໂດຍທີ່ຮູ້ ຫຼື ສົງໄສ ວ່າ ຊັບສິນນັ້ນໄດ້ມາຈາກການກະທຳຜິດຕົ້ນ. ສິ່ງທີ່ຍາກອີກຢ່າງໜຶ່ງສຳລັບເຈົ້າໜ້າທີ່ ກໍຄື ການຕັດສິນໃຈວ່າເມື່ອໃດທີ່ຈະຕ້ອງດຳເນີນການສືບສວນ-ສອບສວນແບບຄູ່ຂະໜານໃນຄະດີການຟອກເງິນ. ມັນຈຳເປັນທີ່ຈະຕ້ອງມີການດຳເນີນການສືບສວນ-ສອບສວນການກະທຳຜິດຕົ້ນ, ການສັ່ງຟ້ອງ ແລະ ການພິຈາລະນາຕັດສິນ ໄປພ້ອມໆກັນ ຫຼື ບໍ່? ທ່ານ ແບັດ ໄດ້ກ່າວວ່າ ໜ່ວຍງານບັງຄັບໃຊ້ກົດໝາຍຂອງປະເທດກຳປູເຈຍ ແລະ ຫວຽດນາມໄດ້ພົບພໍ້ກັບບັນຫາດັ່ງກ່າວ ໂດຍສະເພາະໃນຄະດີການລັກລອບນຳເຂົ້າ-ສົ່ງອອກເງິນສົດຈຳນວນຫຼາຍເກີນກຳນົດ ທີ່ໄດ້ເກີດຂຶ້ນຜ່ານມາບໍ່ດົນນີ້. ປະເທດລາວເອງກໍຈຳເປັນທີ່ຈະຕ້ອງໄດ້ມີການທົບທວນນິຕິກຳຂອງຕົນຕໍ່ກັບບັນຫາດັ່ງກ່າວເຊັ່ນດຽວກັນ.

ທ່ານ ແບັດ ໄດ້ໄຈ້ແຍກໃຫ້ເຫັນລະຫວ່າງຫຼັກຖານສອງຊະນິດທີ່ແຕກຕ່າງກັນຄື: ຫຼັກຖານທາງກົງ ເຊັ່ນວ່າ ການຮັບ, ການຕິດຕາມ ແລະ ການບັນທຶກສຽງການສົນທະນາ; ສ່ວນຫຼັກຖານທາງອ້ອມ, ຫຼັກຖານຕາມການສະຫຼຸບ ຫຼື ຫຼັກຖານຕາມສະຖານະການ ໂດຍອີງຕາມຜົນສະຫຼຸບການວິເຄາະເຫດການ ທີ່ສາມາດນຳໄປສູ່ການສະຫຼຸບຂໍ້ເທັດຈິງ. ກໍລະນີສຶກສາໃນຕົວຈິງຫຼາຍກໍລະນີ ໄດ້ຖືກນຳສະເໜີເປັນຕົວຢ່າງຂອງຫຼັກຖານຊະນິດດັ່ງກ່າວ ແລະ ໃນນັ້ນກໍມີ ຄະດີການລັກລອບນຳເຂົ້າ-ສົ່ງອອກເງິນສົດຈຳນວນຫຼາຍເກີນກຳນົດ ເຊິ່ງເປັນການນຳໃຊ້ເອກະສານທາງການເງິນເຊັ່ນ: ແຊັກ, ໃບສັນຍາໃຊ້ໜີ້ ແລະ ວິທີການປອມແປງທີ່ກຸ່ມຟອກເງິນໃຊ້ເອົາເງິນສົດເຂົ້າໃນບັນຊີທະນາຄານ ໂດຍຜ່ານລະບຽບການລາຍງານແບບອັດຕະໂນມັດ.

ຂໍ້ສະເໜີແນະຂອງຄະນະປະຕິບັດງານສະເພາະກິດເພື່ອດຳເນີນມາດຕະການທາງການເງິນກ່ຽວກັບການຟອກເງິນ (FATF) ຂໍ້ທີ 32 ໄດ້ກຳນົດຂັ້ນຕອນຕ່າງໆ ຊຶ່ງບັນດາລັດຕ້ອງປະຕິບັດຕາມ ເພື່ອຕ້ານ, ສະກັດກັ້ນການລັກລອບນຳເຂົ້າ-ສົ່ງອອກເງິນສົດຢູ່ຕາມຈຸດຊາຍແດນຕ່າງໆ ແລະ ທ່ານ ແບັດ ກໍໄດ້ສະເໜີ ສັນຍານຫຼັກຕ່າງໆຂອງຜູ້ລັກລອບນຳເຂົ້າ-ສົ່ງອອກເງິນສົດທີ່ເຈົ້າໜ້າທີ່ຊາຍແດນຕ້ອງກວດຄົ້ນ ຕົວຢ່າງ: ການນຸ່ງຖືທີ່ໜາ ແລະ ສັບຊ້ອນຫຼາຍເກີນໄປ ຫຼື ໜັງສືເດີນທາງທີ່ສະແດງໃຫ້ເຫັນວ່າບຸກຄົນນັ້ນໄດ້ເດີນທາງເຂົ້າ-ອອກ ແລະ ພັກອາໄສຢູ່ໃນໄລຍະສັ້ນເລື້ອຍໆ. ທ່ານ ແບັດ ໄດ້ສະຫຼຸບວ່າການກວດສອບປະຫວັດກ່ຽວກັບການເງິນຂອງຜູ້ຖືກສົງໄສສາມາດເປີດເຜີຍໄດ້ວ່າ ພວກເຂົາ "ກຳລັງໃຊ້ຊີວິດເກີນຊັບສິນທີ່ຕົນເອງມີຢູ່" ຫຼື ບໍ່ ຕົວຢ່າງການດຳລົງຊີວິດແບບຟູມເຟືອຍຫຼາຍເກີນກວ່າລາຍຮັບຂອງເຂົາເຈົ້າທີ່ໄດ້ມາຢ່າງຖືກຕ້ອງຕາມກົດໝາຍ. ຫຼັກຖານທາງອ້ອມດັ່ງກ່າວ ສາມາດນຳໄປສູ່ການຕັດສິນລົງໂທດສະຖານການຟອກເງິນ ຖ້າຫາກວ່າຜູ້ຖືກສົງໄສບໍ່ສາມາດອະທິບາຍກ່ຽວກັບຊັບສິນທີ່ຕົນຄອບຄອງໄດ້ ໂດຍອີງຕາມລາຍຮັບທີ່ຖືກກົດໝາຍຂອງຕົນເອງ.



# ທ່ານ ທອມ ແຮນເຊັນ

ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
"ການສືບສວນ-ສອບສວນ ການຟອກເງິນ"



ທ່ານ ແຮນເຊັນ ແລກປ່ຽນປະສົບການຂອງຕົນໃນການວາງແຜນເພື່ອດຳເນີນການສືບສວນ-ສອບສວນທາງດ້ານການເງິນ. ກ່ອນອື່ນເພິ່ນໄດ້ນຳສະເໜີກ່ຽວກັບຂໍ້ຄວນພິຈາລະນາໃນພາກປະຕິບັດ ທີ່ບັນດາກະຊວງ ແລະ ອົງການຈັດຕັ້ງກ່ຽວຂ້ອງຕ້ອງຄຳນຶງເຖິງ. ພວກເຮົາຈະເຮັດວຽກຢ່າງມີປະສິດທິພາບ ໃນການສືບສວນ-ສອບສວນທີ່ມີຄວາມສະລັບສັບຊ້ອນໄດ້ແນວໃດ? ມັນຕ້ອງມີທັກສະຄວາມສາມາດ ຊຶ່ງບໍ່ໄດ້ຖືກນຳໃຊ້ໃນການສືບສວນ-ສອບສວນອາຊະຍາກຳປະເພດອື່ນ ໂດຍເນັ້ນໃສ່ຄວາມຮ່ວມມື, ມີຫຼາຍໜ່ວຍງານເຮັດວຽກຮ່ວມກັນລວມທັງຜູ້ລາຍງານ ແລະ ປະຊາຊົນທົ່ວໄປ, ຕ້ອງເຮັດວຽກຢ່າງໃກ້ຊິດກັບຂະແໜງການທະນາຄານ ແລະ ການມີສ່ວນຮ່ວມຈາກຜູ້ຊ່ຽວຊານ. ມີຫຼາຍກໍລະນີທີ່ຕ້ອງມີກົນໄກການເຮັດວຽກແບບຂ້າມຊາດ ເຊັ່ນ: ການຮ່ວມມືລະຫວ່າງປະເທດໂດຍຜ່ານການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ຜ່ານເຄືອຂ່າຍການປະສານງານແບບບໍ່ເປັນທາງການ. ມັນເປັນສິ່ງສຳຄັນທີ່ຈະຕ້ອງຕອບສະໜອງຢ່າງຮີບດ່ວນຕໍ່ຄຳຮ້ອງຂໍ ເພື່ອຮັບປະກັນທາງດ້ານຫຼັກຖານ ຫຼື ຊັບສິນທາງອາຍາ ກ່ອນທີ່ອາຊະຍາກອນຈະມີໂອກາດໄດ້ເຄື່ອນຍ້າຍ ຫຼື ຊຸກເຊື່ອງ.

ການຫັນເອົາຂໍ້ມູນຂ່າວກອງມາເປັນຫຼັກຖານ ມີຄວາມສຳຄັນເພື່ອຮັບປະກັນການຕັດສິນການກະທຳຜິດສະຖານການຟອກເງິນ. ເພື່ອສະກັດກັ້ນກຸ່ມອາຊະຍາກອນຂ້າມຊາດທີ່ມີການຈັດຕັ້ງຢ່າງມີປະສິດທິຜົນ, ຕ້ອງມີການດຳເນີນການສືບສວບ-ສອບສວນແບບຄູ່ຂະໜານກັບການສືບສວນ-ສອບສວນການກະທຳຜິດຕົ້ນ. ປະຫວັດທາງການເງິນຂອງຜູ້ຖືກສົງໄສ ສະແດງໃຫ້ເຫັນຢ່າງຈະແຈ້ງວ່າບຸກຄົນນັ້ນອາດເປັນອາຊະຍາກອນ ໂດຍບົ່ງບອກຊ່ອງຫວ່າງທີ່ສຳຄັນລະຫວ່າງລາຍຮັບ ແລະ ຊັບສິນ ແລະ ຄ່າໃຊ້ຈ່າຍໃນການດຳລົງຊີວິດທີ່ຟູມເຟືອຍຂອງພວກເຂົາ.




ການສືບສວນ-ສອບສວນແບບຄູ່ຂະໜານ ຕ້ອງມີການວາງແຜນລະອຽດ ແລະ ກຳນົດສິ່ງທ້າທາຍຕ່າງໆ ເຊັ່ນ ວິທີທີ່ຈະວິເຄາະຫຼັກຖານຈາກເອກະສານຫຼາຍຮ້ອຍສະບັບ, ຈະຄຸ້ມຄອງຮັກສາຫຼັກຖານດ້ວຍວິທີໃດ, ແລະ ວິທີໃນການລະບຸ ແລະ ອາຍັດຊັບສິນຂອງຜູ້ຖືກສົງໄສ, ຈະມີການຄຸ້ມຄອງຮັກສາຊັບສິນເຫຼົ່ານັ້ນແນວໃດ ພາຍຫຼັງທີ່ຍຶດມາ. ໃນກໍລະນີທີ່ມີຊັບສິນຫຼາຍຢ່າງ, ມີການນຳໃຊ້ບັນຊີທະນາຄານຫຼາຍບັນຊີ ແລະ ຫຼາຍທຸລະກິດ, ຈຳເປັນຕ້ອງມີການສືບຄົ້ນທັງໝົດ. ໃນຕອນທ້າຍຂອງການນຳສະເໜີ, ທ່ານ ແຮນເຊັນ ໄດ້ເນັ້ນໜັກເຖິງຄວາມຈຳເປັນຂອງການສ້າງທີມງານຊ່ຽວຊານ ທີ່ປະກອບມີເຈົ້າໜ້າທີ່ບັງຄັບໃຊ້ກົດໝາຍ, ຕຸລາການ, ນັກການເງິນ, ການບັນຊີ, ຜູ້ຊ່ຽວຊານທາງດ້ານເຕັກໂນໂລຊີຂໍ້ມູນຂ່າວສານ ຫຼື ຄອມພິວເຕີ ແລະ ຊ່ຽວຊານທາງດ້ານກົດໝາຍສາກົນ, ແລະ ທີ່ສຳຄັນອີກອັນໜຶ່ງກໍຄື ຕ້ອງເລີ່ມຕົ້ນຈາກການສືບສວນ-ສອບສວນກໍລະນີທີ່ມີຄວາມສະລັບສັບຊ້ອນທີ່ໜ້ອຍກ່ວາເພື່ອສ້າງຄວາມຮັບຮູ້ ແລະ ປະສົບການພາຍໃນທີມ.





## ທ່ານ ນາງ ແພງສີ ແພງເມືອງ

ຫົວໜ້າສຳນັກງານຂໍ້ມູນຕ້ານການຟອກເງິນ ແຫ່ງ ສປປ ລາວ

"ສະພາບການອາຊະຍາກຳການຟອກເງິນ ຢູ່ ສປປ ລາວ ແລະ ບົດບາດຂອງໜ່ວຍງານສືບສວນທາງການເງິນ"



ທ່ານ ນາງ ແພງສີ ໄດ້ຍົກປະເດັນທີ່ສຳຄັນກ່ຽວກັບບົດບາດ ແລະ ໜ້າທີ່ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ວຽກງານຂອງຄະນະກຳມະການຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຕ່າງໆ ໃນການກະກຽມຄວາມພ້ອມຕໍ່ການປະເມີນຮອບດ້ານ ໂດຍກຸ່ມຕ້ານການຟອກເງິນແຫ່ງອາຊີ-ປາຊີຟິກ ທີ່ຈະເລີ່ມຂຶ້ນໃນປີ 2020-21.

ການປະເມີນຄວາມສ່ຽງລະດັບຊາດ ດ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (NRA) ໄດ້ສຳເລັດຂຶ້ນ ໃນປີ 2018 ເຊິ່ງກວມເອົາສາມດ້ານຄື: 1) ການປະເມີນໄພຂົ່ມຂູ່ ແລະ ຄວາມສ່ຽງດ້ານການຟອກເງິນ; 2) ການປະເມີນດ້ານມາດຕະການປ້ອງກັນການຟອກເງິນ; 3) ການປະເມີນກ່ຽວກັບຂະແໜງການທີ່ມີຄວາມສ່ຽງຕໍ່ການຟອກເງິນ. ຜົນການປະເມີນດັ່ງກ່າວ ຊີ້ໃຫ້ເຫັນວ່າ ມີ 8 ໃນ 17 ຂະແໜງການທີ່ຖືກປະເມີນ ແລະ ຖືກລະບຸວ່າມີຄວາມສ່ຽງຕໍ່ການຟອກເງິນໄດ້ແກ່: ທະນາຄານ, ກາຊີໂນ, ທຸລະກິດຊື້-ຂາຍວັດຖຸມີຄ່າ ແລະ ເຄື່ອງເກົ່າ, ຂະແໜງການຫຼັກຊັບ, ຂະແໜງການປະກັນໄພ, ຮ້ານແລກປ່ຽນເງິນຕາທົ່ວໄປ, ບໍລິສັດຕົວແທນໂອນເງິນດ່ວນ ແລະ ທຸລະກິດອະສັງຫາລິມະຊັບ. ເພີ່ມຍັງໄດ້ນຳສະເໜີກ່ຽວກັບແຜນປະຕິບັດງານຊຶ່ງກວມເອົາ 6 ດ້ານ ຄື: ດ້ານນະໂຍບາຍ ແລະ ຍຸດທະສາດຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ; ດ້ານນິຕິກຳ; ດ້ານປະສິດທິຜົນຂອງການດຳເນີນຄະດີ; ດ້ານປະສິດທິພາບຂອງການຄຸ້ມຄອງຕິດຕາມ ແລະ ກວດກາ; ດ້ານປະສິດທິພາບຂອງການຊອກຮູ້ລູກຄ້າ, ການລາຍງານທຸລະກຳທີ່ໜ້າສົງໄສ ແລະ ການວິເຄາະ; ລວມທັງການຮ່ວມມືພາຍໃນ ແລະ ຕ່າງປະເທດ.

ໃນການກະກຽມຄວາມພ້ອມສຳລັບການປະເມີນຮອບດ້ານວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍທີ່ຈະເລີ່ມຂຶ້ນໃນປີ 2020, ທ່ານ ນາງ ແພງສີ ໄດ້ລາຍງານວ່າລັດຖະບານລາວ ໄດ້ອອກຂໍ້ຕົກລົງ ສະບັບເລກທີ 90/ນຍ ລົງວັນທີ 16/10/2019 ວ່າດ້ວຍການແຕ່ງຕັ້ງ ຄະນະສະເພາະກິດ ຮັບຜິດຊອບການປະເມີນວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ຂອງ ສປປ ລາວ ຄັ້ງທີ 2 (2020-2021). ພາຍໃຕ້ຂໍ້ຕົກລົງ ຂອງ ຄະນະສະເພາະກິດ, ໄດ້ມີການແຕ່ງຕັ້ງ ແລະ ກະກຽມການເຄື່ອນໄຫວວຽກງານ ຂອງ ສີ່ພາກສ່ວນ ຄື: ພາກສ່ວນທີ 1: ວຽກງານເຜີຍແຜ່ ແລະ ເຊື່ອມຊຶມ ຊຶ່ງປະກອບມີຄະນະກຳມະການ 15 ທ່ານ, ຊີ້ນຳໂດຍ ທ່ານຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ; ພາກສ່ວນທີ 2: ວຽກງານນິຕິກຳ ແລະ ກົນໄກ ປະກອບມີຄະນະກຳມະການ 19 ທ່ານ, ຊີ້ນຳໂດຍ ທ່ານ ລັດຖະມົນຕີກະຊວງຍຸຕິທຳ; ພາກສ່ວນທີ 3: ວຽກງານຄຸ້ມຄອງປະກອບດ້ວຍຄະນະກຳມະການ 49 ທ່ານຊີ້ນຳໂດຍ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ພາກສ່ວນທີ 4 ແມ່ນ ວຽກງານດຳເນີນຄະດີ ໂດຍມີ ທ່ານປະທານສານສູງສຸດ ແຫ່ງ ສປປ ລາວ ເປັນຜູ້ຊີ້ນຳ ແລະ ປະກອບມີຄະນະກຳມະການ 47 ທ່ານ.



ທ່ານ ນາງ ແພງສີ ໄດ້ແຈ້ງໃຫ້ຊາບກ່ຽວກັບແຜນການປະຕິບັດງານເພື່ອກຽມພ້ອມຮອງຮັບໜ່ວຍງານປະເມີນຜົນດັ່ງກ່າວ ເຊິ່ງ ສປປ ລາວ ຈະຕ້ອງສຳເລັດໜ້າວຽກຕາມກຳນົດເວລາດັ່ງຕໍ່ໄປນີ້: ກຽມເອກະສານທາງດ້ານນິຕິກຳ ແລະ ດ້ານປະສິດທິຜົນ ໃຫ້ສຳເລັດໃນເດືອນກັນຍາ 2019; ສົ່ງບົດລາຍງານດ້ານນິຕິກຳ ໃນເດືອນມີນາ 2020; ສົ່ງບົດລາຍງານດ້ານປະສິດທິຜົນ ໃນເດືອນມິຖຸນາ 2020; ຈັດກອງປະຊຸມ ຄັ້ງທີ 1 ໃນເດືອນສິງຫາ 2020; ລົງກວດກາຕົວຈິງ ເດືອນພະຈິກ 2020; ກອງປະຊຸມຊ່ອງໜ້າຄັ້ງທີ 3 ໃນລະຫວ່າງເດືອນມີນາ - ເມສາ 2021 ແລະ ປ້ອງກັນຜ່ານກອງປະຊຸມປະຈຳປີ ໃນເດືອນ ກໍລະກົດ 2021.

# ທ່ານ ນາງ ສິຣິຣັດ ຣັດຕະນະມົງຄົນສັກ

ເຈົ້າໜ້າທີ່ສືບສວນ-ສອບສວນຂັ້ນອາວຸໂສ, ສຳນັກງານປ້ອງກັນ ແລະ ປາບປາມການຟອກເງິນ ແຫ່ງປະເທດໄທ

"ບົດບາດ ແລະ ສິດອຳນາດຂອງສຳນັກງານປ້ອງກັນ ແລະ ປາບປາມການຟອກເງິນ ແຫ່ງປະເທດໄທ"



ທ່ານ ນາງ ສິຣິຣັດ ຣັດຕະນະມົງຄົນສັກ ໄດ້ນຳສະເໜີກ່ຽວກັບສຳນັກງານປ້ອງກັນ ແລະ ປາບປາມການຟອກເງິນແຫ່ງ ປະເທດໄທ (ປປງ). ໂດຍແຕກຕ່າງຈາກຂະແໜງການຕ້ານການຟອກເງິນຢູ່ ສປປ ລາວ, ສຳນັກງານ ປປງ ມີອຳນາດໃນການປະຕິບັດວຽກງານ ໃນຖານະເປັນໜ່ວຍງານບັງຄັບໃຊ້ກົດໝາຍ. ເລຂາທິການໃຫຍ່ຂອງສຳນັກງານ ປປງ ຢູ່ພາຍໃຕ້ການຄຸ້ມຄອງ, ຊີ້ນຳໂດຍກົງຈາກນາຍົກລັດຖະມົນຕີ ແລະ ມີອຳນາດໃນການສືບສວນ-ສອບສວນ, ຈັບກຸມຕົວ ແລະ ຍຶດຊັບສິນໃນຄະດີການຟອກເງິນ ຖ້າຫາກມີຫຼັກຖານພຽງພໍ.

ໃນໄລຍະເວລາ 4 ປີທີ່ຜ່ານມາ ສຳນັກງານ ປປງ ໄດ້ຍຶດຊັບສິນລວມເປັນມູນຄ່າຈຳນວນ 1 ຕື້ ໂດລາສະຫະລັດ. ໃນນັ້ນ ລວມມີ ທີ່ດິນ, ສິ່ງປຸກສ້າງ, ບັນຊີທະນາຄານ, ເພັດພອຍອັນຍະມະນີ, ເງິນສົດ ແລະ ຍານພາຫະນະ. ນອກຈາກນີ້ ຍັງມີຊັບສິນທີ່ພິເສດໄປກວ່ານັ້ນ ກໍຄື ແຂ້ ຊຶ່ງເປັນສິ່ງທ້າທາຍຢ່າງໜຶ່ງ ເນື່ອງຈາກວ່າສັດເຫຼົ່ານີ້ຈຳເປັນຕ້ອງນຳມາລ້ຽງ. ໃນຈຳນວນເງິນທີ່ຍຶດມາໄດ້ນັ້ນ ສ່ວນໜຶ່ງຖືກນຳໃຊ້ເປັນທຶນໃຫ້ແກ່ ສຳນັກງານ ປປງ ແລະ ສ່ວນທີ່ເຫຼືອ ແມ່ນຖືກນຳໃຊ້ເຂົ້າໃນການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກອາຊະຍາກຳ.




ສຳນັກງານ ປປງ ມີ 4 ໜ້າທີ່ຫຼັກໃນການປະຕິບັດງານ ຄື: 1) ມີພາລະບົດບາດເປັນໜ່ວຍງານຂໍ້ມູນທາງການເງິນ 2) ຊີ້ນຳບັນດາຫົວໜ່ວຍທີ່ມີໜ້າທີ່ລາຍງານ 3) ບັງຄັບໃຊ້ກົດໝາຍ ແລະ 4) ຄຸ້ມຄອງຊັບສິນ. ທ່ານ ນາງ ສິຣິຣັດ ໄດ້ອະທິບາຍການວິເຄາະຂໍ້ມູນທີ່ໃຊ້ເຂົ້າໃນການສືບສວນ-ສອບສວນ ເພື່ອເຮັດບົດລາຍງານຂໍ້ມູນທາງການເງິນ. ການຮ່ວມມືກັນລະຫວ່າງຫຼາຍໜ່ວຍງານທີ່ແຕກຕ່າງກັນຢູ່ພາຍໃນປະເທດໄທ ເປັນຈຸດຫຼັກທີ່ສຳຄັນ ໃນການປະຕິບັດວຽກງານຂອງສຳນັກງານ ປປງ. ສຳນັກງານ ປປງ ສາມາດເຂົ້າເຖິງຂໍ້ມູນຕ່າງໆໄດ້ໂດຍກົງ ຊຶ່ງປະກອບມີ ບົດບັນທຶກກ່ຽວກັບພາສີ, ບົດບັນທຶກສຳມະໂນຄົວ, ບົດບັນທຶກການແຈ້ງເງິນສົດຢູ່ດ່ານຂ້າມຊາຍແດນ, ບົດບັນທຶກກ່ຽວກັບສິ່ງເສບຕິດ ແລະ ທະບຽນວິສາຫະກິດການຄ້າ. ສຳນັກງານ ປປງ ຮ່ວມມືຢ່າງໃກ້ຊິດກັບໜ່ວຍງານບັງຄັບໃຊ້ກົດໝາຍ ແລະ ໜ່ວຍງານຂໍ້ມູນທາງການເງິນຂອງປະເທດອື່ນໆ ພ້ອມທັງດຳເນີນການສືບສວນ-ສອບສວນຮ່ວມກັນອີກດ້ວຍ.

ສຳນັກງານ ປປງ ກຳນົດການເສຍສິດທາງແພ່ງຕໍ່ຊັບສິນທີ່ມີສ່ວນກ່ຽວຂ້ອງກັບການກໍ່ອາຊະຍາກຳ ແລະ ຂະບວນການດຳເນີນໃນສານແພ່ງ. ໃນປະຈຸບັນ ປະເທດໄທໄດ້ກຳນົດ 28 ປະເພດຂອງການກະທຳຜິດຕົ້ນ ເຊິ່ງພົບເຫັນຫຼາຍທີ່ສຸດໃນຄະດີການຟອກເງິນລວມມີ ການສໍ້ລາດບັງຫຼວງ ແລະ ການສໍ້ໂກງລັດ. ການກະທຳຜິດທີ່ໄດ້ເກີດຂຶ້ນນອກດິນແດນຂອງປະເທດໄທ ຊຶ່ງຍັງຖືກພິຈາລະນາວ່າເປັນການກະທຳຜິດຕົ້ນ ຢູ່ພາຍໃນປະເທດ. ພາຍຫຼັງທີ່ປິດຄະດີລົງແລ້ວ, ກົມຄຸ້ມຄອງຊັບສິນຂອງສຳນັກງານ ປປງ ກໍຈະນຳເອົາຊັບສິນທີ່ຍຶດມານັບຕັ້ງແຕ່ ລົດຫຼູຫຼາລາຄາແພງ ຈົນໄປເຖິງຄຳ, ເພັດພອຍອັນຍະມະນີ ແລະ ເຄື່ອງສັກສິດທາງສາສະໜາອອກມາເພື່ອດຳເນີນການປະມູນ ເຊິ່ງມີມູນຄ່າຫຼາຍລ້ານບາດໃນແຕ່ລະປີ.



## ມື້ທີ 2, ວັນພຸດ ທີ 12 ກຸມພາ 2020

# ທ່ານ ຈຸມພົນ ພັນສຳອິດ

ຮອງຫົວໜ້າກົມພົວພັນຕ່າງປະເທດ, ອົງການໄອຍະການສູງສຸດແຫ່ງປະເທດໄທ
"ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ"



ທ່ານ ຈຸມພົນ ນຳສະເໜີພາບລວມຂອງກົນໄກການຮ່ວມມືສາກົນກ່ຽວກັບບັນຫາທາງອາຍາ ທີ່ປະກອບດ້ວຍ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ (MLA), ການສົ່ງຜູ້ຮ້າຍຂ້າມແດນ ແລະ ການໂອນຕົວ ນັກໂທດ. ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ແມ່ນອີງໃສ່ ສົນທິສັນຍາສອງຝ່າຍ, ສົນທິສັນຍາຫຼາຍຝ່າຍ ແລະ ສົນທິສັນຍາສາກົນທີ່ກ່ຽວຂ້ອງ, ນອກຈາກນີ້ຍັງອີງໃສ່ຫຼັກການຕ່າງຝ່າຍຕ່າງຕອບແທນ ສຳລັບພື້ນຖານທີ່ບໍ່ໄດ້ນຳໃຊ້ສົນທິສັນຍາ. ສປປ ລາວ ເຊັນສົນທິສັນຍາສອງຝ່າຍຮ່ວມກັບສາມປະເທດຄື: ຫວຽດນາມ, ຈີນ ແລະ ເກົາຫຼີເໜືອ ແລະ ສປປ ລາວ ຍັງເປັນພາຄີສົນທິສັນຍາອາຊຽນ (ຫຼື ASEAN Treaty) ປີ 2004 ວ່າດ້ວຍການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ກ່ຽວກັບບັນຫາທາງອາຍາ ຊຶ່ງກວມເອົາສິບປະເທດສະມາຊິກອາຊຽນ. ນອກຈາກນີ້ ສປປ ລາວ ຍັງໄດ້ລົງນາມໃນສົນທິສັນຍາສາກົນ ທີ່ໄດ້ກຳນົດບົດບັນຍັດກ່ຽວກັບການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ເຊັ່ນ: ສົນທິສັນຍາສະຫະປະຊາຊາດວ່າດ້ວຍ ການຕ້ານອາຊະຍາກຳຂ້າມຊາດທີ່ມີການຈັດຕັ້ງ ຊຶ່ງໄດ້ກຳນົດມາດຕະການໃນລະດັບກ້ວາງຂວາງທີ່ສຸດຂອງ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍໃນແງ່ຂອງການສືບສວນ-ສອບສວນ, ການຮ້ອງຟ້ອງ ແລະ ຂະບວນການດຳເນີນຄະດີ ທີ່ກຳນົດໄວ້ພາຍໃຕ້ມາດຕາ 18. ສົນທິສັນຍາສະຫະປະຊາຊາດວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ ແລະ ສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານ ການລັກລອບຄ້າຢາເສບຕິດ ແລະ ວັດຖຸອອກລິດຕໍ່ປະສາດ, ສົນທິສັນຍາເຫຼົ່ານີ້ສະໜອງຂໍ້ກຳນົດໃນການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ລະຫວ່າງບັນດາລັດພາຄີ. ນິຕິກຳພາຍໃນປະເທດກໍເປັນພື້ນຖານໜຶ່ງໃຫ້ແກ່ການຮ່ວມມື ແລະ ຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ, ສຳລັບປະເທດໄທ ແມ່ນອີງໃສ່ກົດໝາຍວ່າດ້ວຍ ຄວາມຮ່ວມມືທາງອາຍາລະຫວ່າງປະເທດ ທີ່ປະກາດນຳໃຊ້ໃນປີ 1992.

ທ່ານ ຈຸມພົນ ຍົກຕົວຢ່າງບາງປະເພດຂອງການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ເຊັ່ນ: ການເອົາຄຳໃຫ້ການພະຍານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງໃນຂັ້ນສອບສວນ ແລະ ຂັ້ນສານ; ການສະໜອງເອກະສານ, ພະຍານຫຼັກຖານ ແລະ ບັນທຶກທີ່ກ່ຽວຂ້ອງ (ຕົວຢ່າງ: ບັນທຶກທະນາຄານ, ເອກະສານທາງທຸລະກິດ...); ການກວດສອບວັດຖຸ, ສະຖານທີ່ ແລະ ຄົ້ນຫາທີ່ຢູ່ຂອງຄົນ; ການສົ່ງບຸກຄົນໄປໃຫ້ການທີ່ຕ່າງປະເທດ; ແລະ ການໃຫ້ຄວາມຮ່ວມມືໃນການກວດຄົ້ນ, ອາຍັດ, ຢຶດ ແລະ ຮິບຊັບສິນ. ທ່ານ ຈຸມພົນ ໄດ້ກ່າວເນັ້ນເຖິງ ບົດບາດສຳຄັນຂອງອົງການໃຈກາງຂອງແຕ່ລະປະເທດ ຊຶ່ງມີໜ້າທີ່ເປັນສູນກາງ ຕິດຕໍ່ປະສານງານສຳລັບຄຳຮ້ອງຂໍການຊ່ວຍເຫຼືອທາງດ້ານກົດໝາຍ ແລະ ຂໍ້ຄວນພິຈາລະນາທາງດ້ານຄວາມສາມາດຂອງເຈົ້າໜ້າທີ່ຂອງອົງການໃຈກາງ ເປັນຕົ້ນແມ່ນ ຄວາມຮູ້ທາງດ້ານກົດໝາຍອາຍາສາກົນ, ຄວາມສາມາດທາງດ້ານພາສາ ແລະ ການທູດ ແລະ ແນວຄິດສ້າງສັນ. ໃນບັນດາປະເທດສະມາຊິກອາຊຽນ, ອົງການໃຈກາງສຳລັບການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ຕາມປົກກະຕິຈະແມ່ນ ອົງການໄອຍະການສູງສຸດ ຫຼື ກະຊວງຍຸຕິທຳ.




ໃນຕອນທ້າຍຂອງການນຳສະເໜີ ທ່ານ ຈຸມພົນ ໄດ້ແລກປ່ຽນຂໍ້ສັງເກດທີ່ສຳຄັນໃນການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ, ທ່ານ ກ່າວວ່າ ຄຳຮ້ອງຂໍການຊ່ວຍເຫຼືອທາງດ້ານກົດໝາຍ ຕ້ອງໄດ້ຮັບການຈັດຕັ້ງປະຕິບັດຢ່າງຮີບດ່ວນ ແລະ ທຸກຝ່າຍຕ້ອງປຶກສາຫາລືເພື່ອຫາທາງແກ້ໄຂໃນເວລາທີ່ມີຂໍ້ຂັດຂ້ອງ ຊຶ່ງສາມາດດຳເນີນການຜ່ານເຄືອຂ່າຍກ່ຽວຂ້ອງທີ່ເປັນທາງການ ແລະ ບໍ່ເປັນທາງການໄດ້ ເຊັ່ນ: ເຄືອຂ່າຍຮ່ວມມືທາງດ້ານຍຸຕິທຳອາຊີຕາເວັນອອກສ່ຽງໃຕ້ (SEAJust) ແລະ ເຄືອຂ່າຍຕ່າງໆຂອງອາຊຽນ.

# ທ່ານ ເຈຟ ບຣອນ

ທະນາຍຄວາມ, ສະຖາບັນທີ່ປຶກສາດ້ານກົດໝາຍ (Kaufhold & Reveillaud), ປະເທດລຸກຊຳບວກ
"ເງິນດິຈິຕອລ – ຄວາມທ້າທາຍດ້ານກົດລະບຽບຂອງເງິນອີເລັກໂຕຼນິກທີ່ຖືກເຂົ້າລະຫັດ"



ການນຳສະເໜີຂອງ ທ່ານ ບຣອນ ກວມເອົາການກຳເນີດ, ອອກແບບ ແລະ ນຳໃຊ້ເງິນດິຈິຕອລ (cryptocurrencies) ທັງໃນແບບທີ່ຖືກຕ້ອງຕາມກົດໝາຍ ແລະ ຜິດກົດໝາຍ ຢູ່ໃນໂລກປັດຈຸບັນ. ເງິນດິຈິຕອລ ເຊັ່ນ: ບິດຄອຍ (Bitcoin) ຖືກສ້າງຂຶ້ນ ແລະ ຄວບຄຸມໂດຍຜູ້ສ້າງ. ດ້ວຍຮູບແບບໃຊ້ລະຫັດປ້ອງກັນ ແລະ ມີການກະຈາຍອຳນາດ, ເງິນ Bitcoin ໂດຍພື້ນຖານຂອງມັນແມ່ນ ຈຳກັດອຳນາດຂອງລັດຖະບານ ແລະ ທະນາຄານ, ໃນຂະນະດຽວກັນ ມັນອຳນວຍໃຫ້ບຸກຄົນສາມາດໂອນເງິນໃນທົ່ວໂລກໂດຍບໍ່ຕ້ອງລະບຸຊື່ ແລະ ວ່ອງໄວນຳອີກ. ເພາະສະນັ້ນ, Bitcoins ຈຶ່ງສາມາດຖືວ່າ ເປັນທະນະບັດດິຈິຕອລແບບເຂົ້າລະຫັດຢ່າງແທ້ຈິງ.

ເງິນດິຈິຕອລຖືກກຳເນີດຂຶ້ນທຳອິດໃນປີ 2008 ທ່າມກາງວິກິດການທາງການເງິນຂອງໂລກ. ໂດຍນຳໃຊ້ລະບົບປ້ອນລະຫັດ ແລະ ເຕັກໂນໂລຊີ ໃໝ່ ຄື: ບລັອກເຊນ (blockchain) ຫຼື ເຕັກໂນໂລຊີເຮັດທຸລະກຳໂດຍບໍ່ຕ້ອງຜ່ານບຸກຄົນກາງ ຊຶ່ງມັກຈະຖືກຮູ້ກັນໃນນາມ "ເຕັກໂນໂລຊີການປະມວນຜົນແບບກະຈາຍ (DLT)". Blockchain ເປັນເຕັກໂນໂລຊີທີ່ຊົງພະລັງ ແລະ ສ້າງການລົບກວນ ດ້ວຍຄວາມທ້າທາຍຢ່າງເປັນລະບົບຕໍ່ ລະບົບການເງິນ, ການເງິນ ແລະ ລັດຖະບານໂດຍລວມ; ໂດຍສະເພາະແມ່ນບັນດາໜ່ວຍງານສືບສວນ-ສອບສວນທີ່ກຳລັງປະເຊີນກັບອົງການອາຊະຍາກຳທີ່ມີການຈັດຕັ້ງ ແລະ ອົງການກໍ່ການຮ້າຍທີ່ນຳໃຊ້ເງິນດິຈິຕອລເພື່ອສະໜອງທຶນໃຫ້ແກ່ກິດຈະກຳຂອງພວກເຂົາ.

ທ່ານ ບຣອນ ກ່າວວ່າ ໃນຂະນະທີ່ ເງິນດິຈິຕອລ ເຊັ່ນ: Bitcoin ຖືກສ້າງຂຶ້ນໂດຍບໍ່ມີວັດຖຸປະສົງທາງອາຊະຍາກຳ, ແຕ່ກໍຖືກນຳໃຊ້ຢ່າງແຜ່ຫຼາຍເພື່ອເປັນເຄື່ອງມືຊຳລະເງິນໂດຍກຸ່ມອາຊະຍາກອນ ແລະ ໃນບໍລິບົດຂອງອາຊະຍາກຳທີ່ມີການຈັດຕັ້ງ. ອາຊະກອນທີ່ "ສະຫຼາດ" ມັກຈະເປັນຜູ້ນຳໃຊ້ໃນຂັ້ນເລີ່ມຕົ້ນສຳລັບເຕັກໂນໂລຊີທີ່ຊົງພະລັງທີ່ສຸດ ເພື່ອຫຼຸດຜ່ອນແຮງຕ້ານໃນກິດຈະກຳຂອງພວກເຂົາ. ໃນຊ່ວງເສດຖະກິດຕົກຕ່ຳທີ່ສຸດ (Great Depression) ໃນສະຫະລັດອາເມຣິກາ, ລູກຄ້າຜູ້ທຳອິດຂອງລົດຍົນເພື່ອການຄ້າແມ່ນພວກໂຈນປຸ້ນທະນາຄານ. ດ້ວຍນະວັດຕະກຳທາງເຕັກໂນໂລຊີແບບໃໝ່ຄືໃນປັດຈຸບັນ, ໂຈນປຸ້ນທະນາຄານຍິ່ງສາມາດຫຼົບຫຼີກຕຳຫຼວດໄດ້ຢ່າງມີປະສິດທິພາບດີກ່ວາສະໄໝທີ່ພວກເຂົາຍັງຂີ່ມ້າ. ເຊັ່ນດຽວກັນ, ໃນຍຸກທີ່ທັນສະໄໝ, ເວັບໄຊທ໌ຕ່າງໆໃນເຄືອຂ່າຍມືດ (ຫຼື darknet) ເຊັ່ນ: Silk Road ແລະ AlphaBay Market ໄດ້ຮວບຮວມເອົາເຕັກໂນໂລຊີຕົວຄົ້ນຫາທີ່ບໍ່ລະບຸຊື່ ພ້ອມການນຳໃຊ້ Bitcoin ເພື່ອອຳນວຍແກ່ການເຮັດທຸລະກຳທີ່ຜິດກົດໝາຍທີ່ຖືກກວດສອບ ແລະ ບໍ່ລະບຸຊື່. ພາຍຫຼັງການສືບສວນ-ສອບສວນການເຮັດທຸລະກຳທີ່ສະລັບສັບຊ້ອນ, ທັງສອງເວັບໄຊທ໌ດັ່ງກ່າວກໍໄດ້ຖືກປິດລົງ. ໃນການຄົ້ນຫາ ແລະ ປິດເວັບໄຊທ໌ລົງນັ້ນ ມັນຈຳເປັນຕ້ອງມີການສືບສວນ-ສອບສວນທີ່ສັບຊ້ອນ, ມີລະບຽບການ ແລະ ຂັ້ນຕອນທີ່ຫຼາກຫຼາຍ ພ້ອມທັງການປະສານງານທີ່ດີໃນລະດັບສາກົນ.




ນອກຈາກອຳນວຍຄວາມສະດວກໃຫ້ແກ່ກິດຈະກຳໃນເຄືອຂ່າຍເວັບມືດແລ້ວ, ທ່ານ ບຣອນ ຍັງອະທິບາຍໃຫ້ຮູ້ວ່າ ເງິນ Bitcoin ຍັງກໍ່ໃຫ້ເກີດຄວາມທ້າທາຍຕໍ່ລະບົບການເງິນແຫ່ງຊາດ ແລະ ສາກົນນຳອີກ. ທະນາຄານກາງຂອງ ສປປ ລາວ ໄດ້ເຕືອນບັນດາທະນາຄານການຄ້າ, ຫົວໜ່ວຍທຸລະກິດ ແລະ ບຸກຄົນທົ່ວໄປ ໃຫ້ລະມັດລະວັງຕໍ່ການນຳໃຊ້ເງິນດິຈິຕອລ. ທ່ານ ບຣອນ ສະເໜີແນະວ່າ ບັນດາເຈົ້າໜ້າທີ່ທີ່ກຳລັງປະເຊີນກັບກິດຈະກຳອາຊະຍາກຳທີ່ໄດ້ຮັບທຶນສະໜັບສະໜູນຈາກເງິນດິຈິຕອລ ຕ້ອງຊອກຫາຄວາມຊ່ວຍເຫຼືອທາງດ້ານວິຊາການຢ່າງພຽງພໍ ແລະ ຄຳແນະນຳທາງດ້ານກົດໝາຍ ເມື່ອເຖິງເວລາທີ່ຈະທຳການຍຶດ ແລະ ຈັດການກັບຊັບສິນປະເພດໃໝ່ນີ້.

## ທ່ານ ສາສະດາຈານ ສະເຕຟານ ບຣັມ

ມະຫາວິທະຍາໄລ ລຸກຊຳບວກ

"ນະໂຍບາຍດ້ານການຕ້ານອາຊະຍາກຳ ແລະ ການປ້ອງກັນອາຊະຍາກຳ"



ທ່ານ ສຈ. ສະເຕຟານ ບຣັມ ໄດ້ກ່າວເຖິງບົດບາດຂອງນະໂຍບາຍທາງດ້ານອາຊະຍາກຳໃນການປ້ອງກັນອາຊະຍາກຳ ເຊິ່ງເປັນປະເດັນທີ່ບັນດານັກປັດຊະຍາ ແລະ ນັກກົດໝາຍອາຍາຖົກຖຽງກັນເປັນເວລາຫຼາຍສະຕະວັດ. ທ່ານໄດ້ສຶກສາຄົ້ນຄວ້າກ່ຽວກັບ 4 ວິທີການໃນການກຳນົດນະໂຍບາຍທາງດ້ານອາຊະຍາກຳທີ່ແຕກຕ່າງກັນ ລວມທັງຂໍ້ດີ ແລະ ຂໍ້ບົກຜ່ອງຂອງແຕ່ລະວິທີການ ໃນການປ້ອງກັນອາຊະຍາກຳ ແລະ ປົກປັກຮັກສາຄວາມສະຫງົບຢູ່ໃນສັງຄົມ. ນະໂຍບາຍທາງດ້ານອາຊະຍາກຳທີ່ດີແມ່ນຂຶ້ນກັບຈຸດປະສົງ ແລະ ເປົ້າໝາຍຂອງກົດໝາຍອາຍາ ເຊິ່ງຈະຕ້ອງໄດ້ຖືກສ້າງຂຶ້ນຢ່າງຖືກຕ້ອງ ແລະ ສົມເຫດສົມຜົນ.

"ທິດສະດີແງ່ລົບໃນການປ້ອງກັນທົ່ວໄປ" ເຊິ່ງເປັນທິດສະດີແບບດັ້ງເດີມໂດຍອີງໃສ່ການຊັກຈູງ, ການກີດຂວາງ ຫຼື ການສະກັດກັ້ນທາງດ້ານຈິດໃຈ. ທ່ານ ສຈ. ບຣັມ ໄດ້ໂຕ້ຖຽງວ່າ ຍ້ອນມີຫຼາຍປັດໄຈທີ່ສົ່ງຜົນກະທົບຕໍ່ພຶດຕິກຳທາງດ້ານສັງຄົມ ມັນຈຶ່ງບໍ່ສາມາດທີ່ຈະພິສູດໄດ້ຢ່າງແທ້ຈິງວ່າ "ການສະກັດກັ້ນ" ນັ້ນມີປະສິດທິຜົນ ຕົວຢ່າງເຊັ່ນ ປະຊາຊົນຫຼີກລ່ຽງຈາກການກໍ່ອາຊະຍາກຳອັນເນື່ອງມາຈາກການຂົ່ມຂູ່ທີ່ຈະຖືກລົງໂທດ. ພາຍໃຕ້ "ທິດສະດີແງ່ບວກໃນການປ້ອງກັນທົ່ວໄປ" ໂດຍລວມແລ້ວ ກົດໝາຍອາຍາຈະຖືກສ້າງຂຶ້ນມາເພື່ອເປັນເຄື່ອງມືໃນການເສີມສ້າງຄວາມໝັ້ນຄົງຂອງລະບົບກົດໝາຍ. ນະໂຍບາຍທາງດ້ານອາຊະຍາກຳແມ່ນແນໃສ່ຈຸດປະສົງເພື່ອຮັບປະກັນວ່າ ລັດ ແລະ ສັງຄົມປະຕິບັດໜ້າທີ່ຂອງຕົນຢ່າງຖືກຕ້ອງ ແລະ ພ້ອມທັງປົກປັກຮັກສາຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ. ການລະເມີດກົດໝາຍເປັນການກະທຳຜິດເຊິ່ງຈະຕ້ອງໄດ້ຮັບການລົງໂທດ. ເຖິງຢ່າງໃດກໍຕາມ, ບັນຫາຂອງທິດສະດີດັ່ງກ່າວນີ້ແມ່ນການແນໃສ່ສັງຄົມເປັນເປົ້າໝາຍເຊິ່ງບໍ່ແມ່ນບຸກຄົນ. ສະນັ້ນ, ມັນຈຶ່ງສົ່ງຜົນກະທົບໃຫ້ເຫັນໄດ້ຢ່າງຊັດເຈນ.

ພາຍໃຕ້ "ທິດສະດີແງ່ລົບໃນການປ້ອງກັນທົ່ວໄປ", ນະໂຍບາຍຂອງລັດແມ່ນເພື່ອກັກຂັງຜູ້ກະທຳຜິດ ເພື່ອເຮັດໃຫ້ສັງຄົມມີຄວາມປອດໄພຫຼາຍຂຶ້ນ. ສິ່ງດັ່ງກ່າວນີ້ ຈະສົ່ງຜົນເຮັດໃຫ້ສະຖານທີ່ກັກຂັງເກີດຄວາມແອອັດຫຼາຍເກີນໄປ ຍ້ອນມີຈຳນວນຜູ້ຖືກກັກຂັງສູງ ເຊິ່ງເປັນຜົນກະທົບທີ່ສິ້ນເປືອງ ແລະ ບໍ່ຍືນຍົງ. ສ່ວນ "ທິດສະດີແງ່ບວກໃນການປ້ອງກັນທົ່ວໄປ", ກົດໝາຍອາຍາ ແລະ ການລົງໂທດຈະວາງຂໍ້ກຳນົດໂດຍການພະຍາຍາມນຳເອົາຜູ້ກະທຳຜິດກັບຄືນສູ່ສັງຄົມອີກຄັ້ງ. ແຕ່ບັນຫາກໍຄື  ນັກໂທດກາຍເປັນບຸກຄົນທີ່ມີປະຫວັດ ຫຼື ສະຖານະພາບເປັນນັກໂທດ ເຊິ່ງຈະເຮັດໃຫ້ເຂົາເຈົ້າພົບຄວາມຫຍຸ້ງຍາກໃນການປັບຕົວກັບຄືນສູ່ສັງຄົມຢ່າງມີເສລີພາບອີກຄັ້ງ. ໃນໂລກແຫ່ງອຸດົມຄະຕິນັ້ນແມ່ນຈະຕ້ອງມີຄວາມດຸນດ່ຽງກັນລະຫວ່າງສອງທິດສະດີນີ້ ແຕ່ໃນຄວາມເປັນຈິງແລ້ວບໍ່ສາມາດເປັນໄປໄດ້.

ທ່ານ ສຈ. ບຣັມ ໄດ້ສະຫຼຸບດ້ວຍການສະແດງຄວາມຄິດເຫັນວ່າຮູບແບບດັ້ງເດີມຂອງການປ້ອງກັນອາຊະຍາກຳນັ້ນບໍ່ສາມາດບັນລຸຜົນສຳເລັດໄດ້ ເຊິ່ງຜ່ານມາກໍໄດ້ມີການປັບປຸງເສີມຂະຫຍາຍກົດໝາຍອາຍາຢ່າງກວ້າງຂວາງ ແຕ່ມັນກໍ່ບໍ່ສາມາດແກ້ໄຂບັນຫາຕົວຈິງທີ່ເກີດຂຶ້ນຈາກ ຄວາມບໍ່ເທົ່າທຽມກັນທາງດ້ານເສດຖະກິດ-ສັງຄົມໄດ້. ກົດໝາຍອາຍາຄວນທີ່ຈະຖືກຈຳກັດສະເພາະພຽງແຕ່ສິ່ງທີ່ຈຳເປັນພື້ນຖານເທົ່ານັ້ນ. ນະໂຍບາຍການປ້ອງກັນອາຊະຍາກຳຈະຕ້ອງແນໃສ່ບໍ່ແມ່ນສະເພາະພຽງແຕ່ກົດໝາຍອາຍາ ແຕ່ຍັງຕ້ອງຄຳນຶງເຖິງນະໂຍບາຍທາງດ້ານເສດຖະກິດ ແລະ ສັງຄົມທີ່ຮັບປະກັນຄວາມເທົ່າທຽມກັນທາງດ້ານສິດຂອງພົນລະເມືອງ, ການປະຕິບັດໜ້າທີ່ຂອງອົງການຕຸລາການທີ່ເປັນເອກະລາດ ແລະ ຍຸຕິທຳນຳອີກດ້ວຍ.



# ສານຈຳລອງ




ໃນກອງປະຊຸມລະດັບຊາດປະຈຳປີ 2020 ໄດ້ມີການຈຳລອງສະຖານະການຕັດສິນຄະດີໃນສານ (ສານຈຳລອງ) ສຳລັບ 2 ຄະດີ ໂດຍເນັ້ນໃສ່ການປະຕິບັດໃນພາກຕົວຈິງຂອງການດຳເນີນຄະດີອາຍາ.

**ສານຈຳລອງແມ່ນຫຍັງ?**
ສາສະດາຈານ ສະເຕຟານ ບຣັມ ຈາກມະຫາວິທະຍາໄລ ລຸກຊຳບວກ ໄດ້ນຳສະເໜີກ່ຽວກັບສານຈຳລອງ ໂດຍອະທິບາຍວ່າ ເປັນການຈຳລອງເຫດການໄຕ່ສວນຄະດີຕົວຈິງ ເພື່ອຈະສະແດງໃຫ້ເຫັນຂັ້ນຕອນການດຳເນີນຄະດີທີ່ຖືກຕ້ອງ ພ້ອມທັງບົດບາດຂອງຜູ້ຮັບຜິດຊອບ ແລະ ຜູ້ມີສ່ວນຮ່ວມໃນການດຳເນີນຄະດີໃນສານ.





**ຜູ້ຮ່ວມສະແດງ (ຈາກຊ້າຍຫາຂວາ):**

**ທ່ານ ແມັກຊ໌ ມູເລີ,** ທະນາຍຄວາມຈາກບໍລິສັດທີ່ປຶກສາທາງດ້ານກົດໝາຍ Kaufhold & Reveillaud ປະເທດລຸກຊຳບວກ, ຮັບບົດ ທະນາຍຄວາມຝ່າຍຈຳເລີຍ.

**ດຣ. ຣາເຈີ ຣູດີ,** ຮອງສາດສະດາຈານ ຈາກມະຫາວິທະຍາໄລຣູອ໋ອງ (Rouen University) ປະເທດຝຣັ່ງ, ຮັບບົດ ຜູ້ພິພາກສາ.

**ດຣ. ເພີຣິນ ຊີມອນ** ຜູ້ປະສານງານຈາກມະຫາວິທະຍາໄລລຸກຊຳບວກ (University of Luxembourg) ແລະ ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ ປະຈຳນະຄອນຫຼວງວຽງຈັນ, ສປປ ລາວ ຮັບບົດ ຈ່າສານ.

**ດຣ. ລໍເຣັນຊ໌ ຊີຣີ,** ອະດີດທະນາຍຄວາມຝ່າຍຈຳເລີຍຈາກນິວຢອກ ແລະ ອາຈານສອນວິຊາກົດໝາຍອາຍາຈາກມະຫາວິທະຍາໄລລີເວີພູໂຮບ (Liverpool Hope University) ປະເທດອັງກິດ ຮັບບົດ ໄອຍະການ.

# ຄະດີທີ 1: ທ້າວ ແດນຈັນ ພຸດທະໄຊ – ຂໍ້ກ່າວຫາ ການຄ້າຂາຍຢາເສບຕິດ / ການຟອກເງິນ

ທ້າວ ແດນຈັນ ພຸດທະໄຊ ຕົກເປັນຜູ້ຖືກຫາໃນການກະທຳຜິດສະຖານຄ້າຂາຍຢາເສບຕິດ ແລະ ການຟອກເງິນ ເຊິ່ງເປັນການລະເມີດຕໍ່ ມາດຕາ 315 ແລະ ມາດຕາ 130 ຂອງປະມວນກົດໝາຍອາຍາ ຂອງ ສປປ ລາວ. ຜູ້ກ່ຽວຖືກຈັບໄດ້ທີ່ດ່ານຂົວມິດຕະພາບລາວ-ໄທ ໃນວັນທີ 4 ກໍລະກົດ 2019 ເຊິ່ງເຈົ້າໜ້າທີ່ໄດ້ກວດພົບ ຢາເສບຕິດປະເພດ ຢາໄອຊ໌ (crystal meth) ຈຳນວນ 500 ເມັດ, ເງິນສົດຈຳນວນ 500.000 (ຫ້າແສນ) ໂດລາສະຫະລັດ ພ້ອມທັງຫຼັກຖານທີ່ສະແດງເຖິງແຜນການຟອກເງິນ ໃນປະເທດໄທ.

ທ່ານ ນາງ ຣາເຈີ ຣູດີ, ຜູ້ພິພາກສາ ຕ້ອງຕັດສິນວ່າ ທ້າວ ແດນຈັນ ເປັນຜູ້ກະທຳຜິດ ຫຼື ບໍ່ ໂດຍອີງໃສ່ຫຼັກຖານທີ່ຖືກນຳມາສະເໜີຕໍ່ສານ.

ທ່ານ ລໍເຣັນຊ໌ ຊີຣີ, ໄອຍະການ ໄດ້ຕັ້ງຂໍ້ກ່າວຫາການກະທຳຜິດຮ້າຍແຮງຕໍ່ ທ້າວ ແດນຈັນ. ທ່ານ ຊີຣີ ໄດ້ຍື່ນຫຼັກຖານ 11 ລາຍການຕໍ່ສານ ໃນນັ້ນມີ 3 ລາຍການ ທີ່ກ່ຽວຂ້ອງກັບຂໍ້ກ່າວຫາການຄ້າຂາຍຢາເສບຕິດ ແລະ 8 ລາຍການທີ່ກ່ຽວຂ້ອງກັບຂໍ້ກ່າວຫາການຟອກເງິນ.

ທ່ານ ແມັກຊ໌ ມູເລີ, ທະນາຍຄວາມຝ່າຍຈຳເລີຍ ໄດ້ສອບຖາມເຖິງຄວາມໜ້າເຊື່ອຖືຂອງຫ້ອງວິເຄາະແຫ່ງຊາດ ທີ່ທຳການວິໄຈຢາເສບຕິດ ແລະ ໄດ້ພົບຫຼັກຖານວ່າເປັນຢາໄອຊ໌ (crystal meth).

ອີງຕາມຄຳຮ້ອງຂໍການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ (MLA) ທີ່ທາງເຈົ້າໜ້າທີ່ລາວ ສົ່ງໄປຍັງເຈົ້າໜ້າທີ່ປະເທດໄທ ເຜີຍໃຫ້ເຫັນວ່າ ທ້າວ ແດນຈັນ ບໍ່ມີແຫຼ່ງລາຍຮັບຕາມກົດໝາຍ ແຕ່ຜູ້ກ່ຽວມີບັນຊີທະນາຄານຫຼາຍບັນຊີໃນປະເທດໄທ.




ບັນດາຜູ້ຮ່ວມສະແດງນີ້ ແທນໂດຍຮູບແຕ້ມ
ເນື່ອງຈາກວ່າປະເທດສ່ວນໃຫຍ່ຫ້າມຖ່າຍຮູບພາບໃນຫ້ອງປະຊຸມສານ

ທ່ານ ຊີຣີ ອ້າງວ່າ ໃບຮັບເງິນຈຳນວນໜຶ່ງທີ່ຖືກພົບໃນກະເປົາເງິນຂອງທ້າວ ແດນຈັນ ສະແດງໃຫ້ເຫັນວ່າ ຈຳເລີຍໃຊ້ເງິນສົດຊື້ ແຫວນເພັດ, ເຄື່ອງປະດັບອື່ນໆ ແລະ ລົດຍົນຍີ່ຫໍ້ ປໍຣ໌ເຊ ກາເຢັນ໌ ໜຶ່ງຄັນ ລວມມູນຄ່າ 94.000 ໂດລາສະຫະລັດ. ໂດຍການຍອມຮັບຂອງຜູ້ກ່ຽວເອງ, ທ້າວ ແດນຈັນ ຫາເງິນບໍ່ໄດ້ພຽງພໍທີ່ຈະລ້ຽງດູຄອບຄົວຂອງຕົນເອງ.

ທ່ານສາມາດເຂົ້າເບິ່ງບົດສະຫຼຸບຂອງການພິຈາລະນາຕັດສິນຄະດີນີ້ໄດ້ໃນວີດີໂອ ທີ່:
https://www.youtube.com/watch?v=9n229AkvBBw



ທະນາຍຄວາມ ຝ່າຍຈຳເລີຍ
ທ່ານ ແມັກຊ໌ ມູເລີ

ຜູ້ພິພາກສາ
ທ່ານ ນາງ ຮາເຈີ ຣູດີ

# ຄະດີທີ 2: ນາງ ນ້ອຍ ແສງສະວົງ – ຂໍ້ກ່າວຫາ ການຄ້າມະນຸດ / ໂສເພນີ

ນາງ ນ້ອຍ ແສງສະວົງ ຕົກເປັນຜູ້ຖືກຫາຂາຍປະເວນີ ເຊິ່ງເປັນການກະທຳຜິດຕໍ່ມາດຕາ 260 ຂອງປະມວນກົດໝາຍອາຍາຂອງ ສປປ ລາວ. ນາງ ນ້ອຍ ເຮັດວຽກ ເປັນສາວເສີບ ແລະສາວຂາຍບໍລິການ ໃນບາ ຄາຣາໂອເກະ ແຫ່ງໜຶ່ງໃນປະເທດໄທເປັນເວລາໜຶ່ງປີ, ລາວຕິດເຊື້ອ ເອັຈໄອວີ (HIV) ແລະ ໄວຣັສຕັບອັກເສບ C (Hepatitis C) ແລະ ປັດຈຸບັນ ນາງ ນ້ອຍ ປ່ວຍບໍ່ສາມາດເຮັດວຽກໄດ້.

ນາງ ນ້ອຍ ໄດ້ ລາຍງານກ່ຽວກັບສະຖານະການຂອງຕົນຕໍ່ເຈົ້າໜ້າທີ່ຕຳຫຼວດ ພາຍຫຼັງທີ່ລາວໄດ້ກັບຄືນແຂວງສະຫວັນນະເຂດເປັນເວລາຫຼາຍເດືອນ ດ້ວຍຄວາມຫວັງວ່າ ຈະໄດ້ຮັບຄ່າຊົດເຊີຍຕໍ່ສະຖານະການທີ່ຕົນປະເຊີນ.

ໃນການປົກປ້ອງຂອງລາວ, ທ່ານ ແມັກຊ໌ ມູເລີ ລະບຸວ່າ ຂໍ້ກ່າວຫາການຂາຍປະເວນີ ແມ່ນອີງໃສ່ແຕ່ຄຳໃຫ້ການຂອງຈຳເລີຍພຽງຢ່າງດຽວເທົ່ານັ້ນ. ທ່ານ ມູເລີ ລະບຸວ່າ ຈຳເລີຍຖືກສອບສວນເປັນເວລາ 7 ຊົ່ວໂມງ ແລະ ທ່ານຍັງກ່າວອີກວ່າ "ສິ່ງທີ່ເອີ້ນກັນວ່າ" ຄຳສາລະພາບນັ້ນ ມັນບໍ່ຖືກຕ້ອງ. ທ່ານ ມູເລີ ລະບຸວ່າ ນາງ ນ້ອຍ ເປັນຜູ້ຖືກເຄາະຮ້າຍຂອງການຄ້າມະນຸດ ເຊິ່ງບໍ່ໄດ້ຖືກສືບສວນ-ສອບສວນໂດຍເຈົ້າໜ້າທີ່ຕຳຫຼວດ.

ຝ່າຍໂຈດຕອບໂຕ້ວ່າ ນາງ ນ້ອຍ ໄປເຮັດວຽກໃນ ບາຄາຣາໂອເກະ ດ້ວຍຄວາມສະໝັກໃຈ ແລະ ຂໍ້ເທັດຈິງທີ່ລາວມີເງິນຈ່າຍເພື່ອກັບຄືນມານັ້ນ ສະແດງໃຫ້ເຫັນວ່າ ລາວບໍ່ໄດ້ໄປ ແລະ ຢູ່ທີ່ນັ້ນພາຍໃຕ້ການນາບຂູ່.

ທະນາຍຄວາມ ຝ່າຍຈຳເລີຍ
ທ່ານ ແມັກຊ໌ ມູເລີ



ຈຳເລີຍ
ນາງ ນ້ອຍ ແສງສະວົງ

ບັນດາຜູ້ຮ່ວມສະແດງນີ້ ແທນໂດຍຮູບແຕ້ມ
ເນື່ອງຈາກວ່າປະເທດສ່ວນໃຫຍ່ຫ້າມຖ່າຍຮູບພາບໃນຫ້ອງປະຊຸມສານ

ໃນການອ່ານຄຳຕັດສິນຂອງຜູ້ພິພາກສາ, ທ່ານ ນາງ ຣາເຈີ ໄດ້ອ້າງເຖິງມາດຕາ 36 ຂອງກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ເຊິ່ງທ່ານລະບຸວ່າ ຖ້າບໍ່ມີຫຼັກຖານຜູກມັດ ເພື່ອຢັ້ງຢືນຄຳໃຫ້ການຮັບສາລະພາບ, ຈຳເລີຍຕ້ອງຫຼຸດພົ້ນຈາກຂໍ້ກ່າວຫາ.

ທ່ານສາມາດເບິ່ງວີດີໂອກ່ຽວກັບການຕັດສິນຄະດີນີ້ໄດ້ທີ່:
https://www.youtube.com/watch?v=OrLoSxu-AFw



ໄອຍະການ
ທ່ານ ລໍເຣັນຊ໌ ຊີຣີ

ຜູ້ພິພາກສາ
ທ່ານ ນາງ ຣາເຈີ ຣູດີ

## ດຣ. ເພີຣິນ ຊິມອນ

ມະຫາວິທະຍາໄລລຸກຊໍາບວກ ແລະ ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ

“ຄວາມສໍາຄັນຂອງຫຼັກຖານໃນການດໍາເນີນຄະດີອາຍາ”



ດຣ. ຊິມອນ ໄດ້ກ່າວວ່າ ຫຼັກຖານເປັນສິ່ງສໍາຄັນໃນການດໍາເນີນຄະດີອາຍາ ເຊິ່ງໃຊ້ເພື່ອຢັ້ງຢືນການກະທໍາຜິດທີ່ໄດ້ເກີດຂຶ້ນ ແລະ ລະບຸຕົວຜູ້ກະທໍາຜິດ. ບັນຫາໃນການພິສູດຫຼັກຖານມີຄວາມສໍາຄັນອັນເນື່ອງມາຈາກ “ການສັນນິຖານວ່າເປັນຜູ້ບໍລິສຸດ” ເຊິ່ງເປັນຫຼັກການພື້ນຕໍ່ໃນການດໍາເນີນຄະດີອາຍາ. ຢູ່ໃນ ສປປ ລາວ, ຫຼັກການດັ່ງກ່າວໄດ້ຖືກກໍານົດຢູ່ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ (ມາດຕາ 15) ແລະ ຮັບຮອງດ້ວຍການໃຫ້ສັດຕະຍາບັນຕໍ່ ສົນທິສັນຍາວ່າດ້ວຍສິດຂອງພົນລະເມືອງ ແລະ ສິດດ້ານການເມືອງ ແລະ ລວມທັງຖະແຫຼງການສະຫະປະຊາຊາດວ່າດ້ວຍສິດທິມະນຸດ. ຫຼັກການສັນນິຖານວ່າເປັນຜູ້ບໍລິສຸດກໍານົດພາລະໜ້າທີ່ໃນການພິສູດຫຼັກຖານ ເຊິ່ງເຈົ້າໜ້າທີ່ສືບສວນສອບສວນມີໜ້າທີ່ພິສູດວ່າ ການກະທໍາຜິດນັ້ນໄດ້ເກີດຂຶ້ນ ແລະ ຜູ້ຖືກຫາໄດ້ກະທໍາຜິດ ໂດຍປາສະຈາກຂໍ້ສົງໄສໃດໆ. ຖ້າຫາກຫຼັກຖານບໍ່ຄົບຖ້ວນພຽງພໍເຊິ່ງຍັງມີຂໍ້ສົງໄສຕໍ່ກັບຄວາມຜິດຂອງຜູ້ຖືກຫາແລ້ວ ສານບໍ່ສາມາດທີ່ຈະຕັດສິນລົງໂທດຜູ້ກ່ຽວໄດ້.

ເຈົ້າໜ້າທີ່ຕໍາຫຼວດ, ພະນັກງານໄອຍະການ ແລະ ສານມີໜ້າທີ່ໃນການພິສູດຫຼັກຖານໃນຄະດີອາຍາ ໂດຍສະເພາະການເກັບກໍາ ແລະ ການຊັ່ງຊາຕີລາຄາຫຼັກຖານ. ຕໍ່ມາ ດຣ. ຊິມອນ ກໍໄດ້ອະທິບາຍກ່ຽວກັບເປົ້າໝາຍຂອງການພິສູດ. ໃນການກໍານົດການກະທໍາຜິດທີ່ເກີດຂຶ້ນນັ້ນ ໄອຍະການຈະຕ້ອງຮັບປະກັນວ່າມີຫຼັກຖານພຽງພໍທີ່ຈະຢັ້ງຢືນຂໍ້ກ່າວຫາດັ່ງກ່າວ. ສໍາລັບການກະທໍາຜິດບາງປະເພດ ຫຼັກຖານທີ່ຢັ້ງຢືນການກະທໍາ (ອົງປະກອບທາງດ້ານພາວະວິໄສ) ພຽງຢ່າງດຽວແມ່ນຖືວ່າພຽງພໍ ແຕ່ກໍຍັງມີການກະທໍາຜິດອີກຫຼາຍປະເພດທີ່ຝ່າຍໂຈດຈໍາເປັນຕ້ອງພິສູດໃຫ້ເຫັນເຖິງເຈດຕະນາຂອງຜູ້ກະທໍາຜິດ (ອົງປະກອບທາງດ້ານອັດຕະວິໄສ).

ຫຼັກຖານປະເພດຕ່າງໆ ແລະ ຄວາມໜ້າເຊື່ອຖືຂອງຫຼັກຖານ ກໍໄດ້ຖືກຍົກຂຶ້ນມາອະທິບາຍຢ່າງລະອຽດ ເຊິ່ງໃນນັ້ນປະກອບດ້ວຍ ຫຼັກຖານທາງດ້ານວັດຖຸ, ຫຼັກຖານທາງດ້ານເອກະສານ, ຄໍາໃຫ້ການ ແລະ ຄໍາຮັບສາລະພາບ. ດຣ. ຊິມອນ ຍົກໃຫ້ເຫັນຂໍ້ສັງເກດຢູ່ໃນກົດໝາຍການດໍາເນີນຄະດີອາຍາ (ມາດຕາ 36) ທີ່ໄດ້ກໍານົດວ່າ ການຕັດສິນລົງໂທດບໍ່ສາມາດອີງໃສ່ຄໍາຮັບສາລະພາບເປັນພື້ນຖານພຽງຢ່າງດຽວເທົ່ານັ້ນ ແຕ່ຈະຕ້ອງຢັ້ງຢືນພ້ອມດ້ວຍຫຼັກຖານປະເພດອື່ນໆທີ່ໜ້າເຊື່ອຖືໄດ້. ສິ່ງດັ່ງກ່າວນີ້ພົວພັນເຖິງ ປະເດັນກ່ຽວກັບການຮັບເອົາຫຼັກຖານມາພິຈາລະນາ ເຊິ່ງມີເງື່ອນໄຂກວມເອົານັບຕັ້ງແຕ່ປະເພດຂອງຫຼັກຖານຈົນໄປເຖິງວິທີການເກັບກໍາຫຼັກຖານ. ເຈົ້າໜ້າທີ່ສືບສວນ-ສອບສວນຈະຕ້ອງເຄົາລົບສິດຂອງບຸກຄົນໃນລະຫວ່າງຂະບວນການເກັບກໍາຫຼັກຖານ ແລະ ວິທີການເກັບກໍາຫຼັກຖານຈະຕ້ອງປະຕິບັດຂຶ້ນບົນພື້ນຖານຫຼັກການຄວາມຈໍາເປັນເທົ່ານັ້ນ. ກຽດສັກສີຂອງຜູ້ທີ່ເປັນເປົ້າໝາຍຂອງການສືບສວນ-ສອບສວນ ຈະຕ້ອງໄດ້ຮັບການປົກປ້ອງຕະຫຼອດໄລຍະຂອງການດໍາເນີນການສືບສວນ-ສອບສວນ. ຕົວຢ່າງ: ຫຼັກຖານທີ່ໄດ້ມາໂດຍການໃຊ້ຄວາມຮຸນແຮງທາງດ້ານຮ່າງກາຍ ແລະ ຈິດໃຈ ໃນຂະນະທີ່ດໍາເນີນການສືບສວນ-ສອບສວນ ຈະບໍ່ສາມາດນໍາມາພິຈາລະນາໃນສານໄດ້.



ດຣ. ຊິມອນ ໄດ້ກ່າວປິດທ້າຍດ້ວຍການຍໍ້າຄືນວ່າ ຫຼັກຖານທັງໝົດຈະຕ້ອງຄົບຖ້ວນພຽງພໍ ຕໍ່ການກໍານົດ ລັກສະນະຂອງການກະທໍາຜິດທີ່ເກີດຂຶ້ນ ແລະ ຜູ້ກະທໍາຜິດຂອງການກະທໍາຜິດດັ່ງກ່າວ ພ້ອມທັງຕ້ອງມີຄວາມໜ້າເຊື່ອຖື ແລະ ສາມາດນໍາມາພິຈາລະນາ ເພື່ອເປັນພື້ນຖານໃຫ້ແກ່ການສັ່ງຟ້ອງດໍາເນີນຄະດີອາຍາ.

# ທ່ານ ຣິກ ພາວເວີ

ສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
"ການສະກັດກັ້ນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ຂອບວຽກດ້ານກົດໝາຍຂອງອົງການສະຫະປະຊາຊາດ"



ທ່ານ ຣິກ ພາວເວີ ໄດ້ນຳສະເໜີກ່ຽວກັບ ມາດຕະຖານສາກົນສຳລັບການຕ້ານ, ສະກັດກັ້ນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ. ໃນຫຼາຍປີທີ່ຜ່ານມາ, ການໂຈມຕີຂອງກຸ່ມກໍ່ການຮ້າຍທີ່ສ້າງຄວາມເສຍຫາຍຢ່າງມະຫາສານໄດ້ເກີດຂຶ້ນຫຼາຍຄັ້ງ ເຊັ່ນ: ການວາງລະເບີດໃຕ້ດິນ ຢູ່ທີ່ ລອນດອນ ໃນປີ 2005 ແລະ ການໂຈມຕີສະຖານທີ່ບັນເທີງ ຢູ່ທີ່ ປາຣີ ໃນປີ 2015 ດຳເນີນຂຶ້ນໂດຍກຸ່ມກໍ່ການຮ້າຍນ້ອຍໆ ເຊິ່ງສ່ວນໃຫຍ່ນຳໃຊ້ເງິນຈຳນວນພຽງເລັກໜ້ອຍ. 75% ຂອງ ແຜນການກຸ່ມກໍ່ການຮ້າຍຢູ່ໃນເອີຣົບ ລະຫວ່າງປີ 1994-2013 ໄດ້ຖືກປະເມີນຄ່າໃຊ້ຈ່າຍຕ່ຳກວ່າ 10,000 ໂດລາສະຫະລັດ. ສຳລັບ "ການໂຈມຕີໂດຍລຳພັງ (Lone Wolf)" ເຊິ່ງມີຜູ້ດຳເນີນການໂຈມຕີພຽງຄົນດຽວ ບາງຄັ້ງກໍນຳໃຊ້ຍານພາຫະນະ, ປືນ ຫຼື ມີດ ພຽງເທົ່ານັ້ນ. ດັ່ງນັ້ນ, ຄ່າໃຊ້ຈ່າຍທີ່ໃຊ້ໃນການກໍ່ການຮ້າຍ ສ່ວນໃຫຍ່ຈະມີຈຳນວນໜ້ອຍລົງຫຼາຍກວ່າເກົ່າ. ໃນປະຈຸບັນ ຍັງມີການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເຊິ່ງພາຍໃນໄລຍະສາມເດືອນໃນທ້າຍປີ 2019 ໄດ້ເກີດມີການໂຈມຕີຂອງຜູ້ກໍ່ການຮ້າຍໃນທົ່ວໂລກເຖິງ 33 ຄັ້ງ ແລະ ເຮັດໃຫ້ຜູ້ຄົນເສຍຊີວິດຈຳນວນຫຼາຍເຖິງ 651 ຄົນ.

ກຸ່ມກໍ່ການຮ້າຍ ກໍປຽບເໝືອນອົງການຈັດຕັ້ງ ແລະ ທຸລະກິດອື່ນໆ ທີ່ຕ້ອງການທຶນມາດຳເນີນກິດຈະການເພື່ອໃຫ້ຢູ່ລອດໄດ້. ທຶນດັ່ງກ່າວນັ້ນ ມາຈາກແຫຼ່ງທີ່ຖືກຕ້ອງຕາມກົດໝາຍ ແລະ ຜິດກົດໝາຍ. ກຸ່ມກໍ່ການຮ້າຍນຳໃຊ້ທຶນເຫຼົ່ານີ້ເຂົ້າໃນການເຝິກຝົນ, ການໂຄສະນາຊວນເຊື່ອ, ການຊອກຫາ, ການດຳເນີນແຜນການ, ການຊື້ອາວຸດ ແລະ ຍານພາຫະນະ ພ້ອມທັງໃຫ້ຄ່າຈ້າງ ແລະ ຄ່າຕອບແທນແກ່ຜູ້ທີ່ລອດຊີວິດ ແລະ ຜູ້ຮັບຈ້າງ. ແຫຼ່ງທີ່ມາຂອງທຶນການກໍ່ການຮ້າຍທີ່ພົບເຫັນສ່ວນໃຫຍ່ນັ້ນ ມາຈາກການບໍລິຈາກສ່ວນຕົວ, ການລ່ວງລະເມີດ ຫຼື ການສວຍໃຊ້ສິດໃນທາງທີ່ບໍ່ຖືກຕ້ອງ ຂອງບັນດາອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ, ການຂົ່ມຂູ່, ການລັກພາຕົວເພື່ອຮຽກຄ່າໄຖ່, ວິສາຫະກິດການຄ້າທີ່ຖືກກົດໝາຍ ແລະ ລວມທັງການສະໜັບສະໜູນຈາກລັດ. ໃນຫຼາຍປີທີ່ຜ່ານມາບໍ່ດົນນີ້, ທຶນການກໍ່ການຮ້າຍຍັງມີແຫຼ່ງທີ່ມາຈາກສື່ສັງຄົມ, ການລະດົມທຶນ, ເງິນດິຈິຕອລ (virtual currencies), ແລະ ການບໍລິການຈ່າຍເງິນທາງອິນເຕີເນັດອີກດ້ວຍ.

ການຍຶດເອົາທຶນຂອງກຸ່ມກໍ່ການຮ້າຍເປັນວິທີການທີ່ຈະສາມາດຍຸຕິພວກເຂົາໄດ້ຢ່າງມີປະສິດທິພາບຫຼາຍທີ່ສຸດ. ສະນັ້ນ, ທຸກໆປະເທດຈະຕ້ອງໄດ້ປະຕິບັດຕາມຂອບວຽກງານດ້ານກົດໝາຍສາກົນໃນການຕ້ານ, ສະກັດກັ້ນການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ເຊິ່ງປະກອບມີ ມະຕິຕົກລົງຂອງສະພາຄວາມໝັ້ນຄົງແຫ່ງສະຫະປະຊາຊາດວ່າດ້ວຍການອາຍັດຊັບສິນ, ການຫ້າມສົ່ງອອກສິນຄ້າທີ່ເປັນອາວຸດ, ການຫ້າມເດີນທາງ ແລະ ລວມທັງ ຂໍ້ສະເໜີແນະຂອງຄະນະປະຕິບັດງານສະເພາະກິດເພື່ອດຳເນີນມາດຕະການທາງການເງິນກ່ຽວກັບການຟອກເງິນ (FATF). ຂໍ້ສະເໜີແນະນີ້ ມີຜົນບັງຄັບໃນທົ່ວໂລກ ເຊິ່ງໃນນັ້ນປະກອບດ້ວຍ ຂໍ້ກຳນົດທາງດ້ານເຕັກນິກ ແລະ ການປະເມີນປະສິດທິພາບ. ທ່ານ ພາວເວີ ຍັງໄດ້ເນັ້ນເຖິງຄວາມສຳຄັນຂອງການຮ່ວມມືລະຫວ່າງອົງການຈັດຕັ້ງຕ່າງໆໃນການຮັບປະກັນການເຄົາລົບປະຕິບັດຕາມຂໍ້ສະເໜີແນະດັ່ງກ່າວເຊິ່ງໃນນີ້ກອມເອົາການປະເມີນຄວາມສ່ຽງລະດັບຊາດທີ່ຊັດເຈນ ຈົນໄປເຖິງການຈັດຕັ້ງປະຕິບັດ. ການຕອບສະໜອງຈາກ "ທຸກໆພາກສ່ວນທັງໝົດພາຍໃນປະເທດ" ເປັນສິ່ງທີ່ຈຳເປັນຕໍ່ການຈັດຕັ້ງປະຕິບັດມາດຕະຖານສາກົນດັ່ງກ່າວ. ດັ່ງນັ້ນ, ແຜນການຍຸດທະສາດໃນການປະສານງານທີ່ຈະແຈ້ງລະຫວ່າງບັນດາຂະແໜງການ ແລະ ຫົວໜ່ວຍຕ່າງໆທີ່ມີໜ້າທີ່ລາຍງານ ຈຶ່ງມີຄວາມສຳຄັນຫຼາຍ. ທຸກໆປະເທດມີໜ້າທີ່ທີ່ຈະຕ້ອງຈັດຕັ້ງປະຕິບັດຢ່າງຕັ້ງໜ້າ ເນື່ອງຈາກວ່າ ການປະຕິບັດທີ່ບໍ່ເຂັ້ມງວດຈະເຮັດໃຫ້ປະເທດນັ້ນກາຍເປັນເປົ້າໝາຍທີ່ບໍ່ເຂັ້ມແຂງ ເຊິ່ງບໍ່ສະເພາະພຽງແຕ່ ກຸ່ມອາຊະຍາກອນທີ່ມີການຈັດຕັ້ງເທົ່ານັ້ນ ແຕ່ຍັງລວມໄປເຖິງ ກຸ່ມທີ່ສະແຫວງຫາການສະໜອງທຶນໃຫ້ແກ່ການກໍ່ການຮ້າຍໂດຍໃຊ້ລະບົບການເງິນທີ່ເປັນທາງການ ຫຼື ບໍ່ເປັນທາງການນຳອີກດ້ວຍ.



# ບົດກ່າວປິດກອງປະຊຸມ

## ທ່ານ ຈັນທີ ໂປລິວັນ

ຫົວໜ້າກົມກວດກາຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ ແຫ່ງ ສປປ ລາວ



ທ່ານ ຈັນທີ ໄດ້ສະແດງຄວາມຂອບໃຈຕໍ່ຜູ້ເຂົ້າຮ່ວມກອງປະຊຸມທັງໝົດ ທີ່ໄດ້ປະກອບສ່ວນຢ່າງຫ້າວຫັນຕະຫຼອດໄລຍະ ສາມວັນຂອງກອງປະຊຸມ. ທ່ານກ່າວວ່າ ກອງປະຊຸມຄັ້ງນີ້ ເປັນປະໂຫຍດຫຼາຍໃນການເສີມສ້າງຄວາມສາມາດສໍາລັບການຕ້ານ ແລະ ສະກັດກັ້ນອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ ໂດຍສະເພາະແມ່ນບັນຫາ ການຟອກເງິນ. ທ່ານ ໄດ້ເນັ້ນໜັກເຖິງຄວາມສໍາຄັນ ຂອງການສ້າງກົນໄກການປະສານງານທີ່ມີປະສິດພາບ ລະຫວ່າງບັນດາໜ່ວຍງານ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ທັງພາຍໃນ ແລະ ສາກົນ ເພື່ອວຽກງານຕ້ານ ແລະ ສະກັດກັ້ນກິດຈະກໍາຂອງອາຊະຍາກໍາຂ້າມຊາດ, ເປັນຕົ້ນແມ່ນການແລກປ່ຽນຂໍ້ມູນຂ່າວສານ ແລະ ຫຼັກຖານທີ່ກ່ຽວຂ້ອງ ຜ່ານການຮ່ວມມື ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ.

ທ່ານ ຈັນທີ ໄດ້ຊຸກຍູ້ໃຫ້ຜູ້ເຂົ້າຮ່ວມກອງປະຊຸມຈາກທຸກພາກສ່ວນ ໃຫ້ນໍາເອົາຄວາມຮູ້ ແລະ ຂໍ້ມູນຂ່າວສານຈາກກອງປະຊຸມ ໄປປັບໃຊ້ເຂົ້າໃນການຈັດຕັ້ງປະຕິບັດໜ້າທີ່ວຽກງານຕົວຈິງຂອງຕົນ. ທ່ານໄດ້ກ່າວຊົມເຊີຍ ແລະ ຂອບໃຈຄະນະຈັດຕັ້ງກອງປະຊຸມ ສໍາລັບຄວາມພະຍາຍາມໃນການກະກຽມ ແລະ ຈັດກອງປະຊຸມປະຈໍາປີ 2020 ຈົນປະສົບຜົນສໍາເລັດ ຢ່າງໜ້າເພິ່ງພໍໃຈ.

## ຂໍ້ສະເໜີແນະ ຈາກກອງປະຊຸມ

- ກອງປະຊຸມນີ້ຈະຖືກສືບຕໍ່ຈັດຂຶ້ນເປັນກອງປະຊຸມປະຈໍາປີ ເພື່ອເປັນການເສີມສ້າງຄວາມເຂັ້ມແຂງ, ຄວາມສາມາດ ແລະ ການແລກປ່ຽນ-ຖອດຖອນບົດຮຽນ. ກອງປະຊຸມຄັ້ງຕໍ່ໄປ (ຄັ້ງທີ 5) ຈະຖືກຈັດຂຶ້ນໃນເດືອນກຸມພາ 2021;
- ສືບຕໍ່ພັດທະນາຄວາມສາມາດຂອງບັນດາເຈົ້າໜ້າທີ່ຂັ້ນແຂວງ ໃນການຕ້ານ ແລະ ສະກັດກັ້ນ ອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ;
- ເຜີຍແຜ່ຂໍ້ມູນຂ່າວສານ ແລະ ຄວາມຮູ້ກ່ຽວກັບ ການຟອກເງິນ, ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ ແລະ ຫຼັກຖານໃນການດໍາເນີນຄະດີອາຍາ ໃຫ້ແກ່ບັນດາໜ່ວຍງານ ແລະ ເຈົ້າໜ້າທີ່ ໃນບັນດາແຂວງຕ່າງໆ;
- ສະໜັບສະໜູນການເຜີຍແຜ່ ແລະ ການສ້າງຂີດຄວາມສາມາດໃນການຈັດຕັ້ງປະຕິບັດ ປະມວນກົດໝາຍອາຍາ, ກົດໝາຍວ່າດ້ວຍ ການດໍາເນີນຄະດີອາຍາ ແລະ ບັນດານິຕິກໍາອື່ນໆທີ່ກ່ຽວຂ້ອງ;
- ສ້າງຄວາມເຂັ້ມແຂງໃນການເກັບກໍາ ແລະ ວິເຄາະຂໍ້ມູນກ່ຽວກັບເຄືອຂ່າຍອາຊະຍາກໍາທີ່ມີການຈັດຕັ້ງ ແລະ ໄພຄຸກຄາມຕ່າງໆທີ່ອາດຈະເກີດຂຶ້ນ;
- ສະໜັບສະໜູນການປະສານງານ ແລະ ການຮ່ວມມືທີ່ເຂັ້ມແຂງ ແລະ ແໜ້ນແຟ້ນຂຶ້ນລະຫວ່າງບັນດາໜ່ວຍງານທີ່ກ່ຽວຂ້ອງ ທັງໃນລະດັບຊາດ, ພາກພື້ນ ແລະ ສາກົນ ໃນວຽກງານຕ້ານ ແລະ ສະກັດກັ້ນອາຊະຍາກໍາຂ້າມຊາດທີ່ມີການຈັດຕັ້ງ;
- ເຜີຍແຜ່ ແລະ ສ້າງຄວາມຮັບຮູ້ຢ່າງກ້ວາງຂວາງໃນທົ່ວປະເທດ ຕໍ່ກັບບົດຮຽນທີ່ຖອດຖອນໄດ້ຈາກກອງປະຊຸມຄັ້ງນີ້.

# ການມອບລາງວັນໃຫ້ຜູ້ຊະນະເລີດ ການຕອບຄຳຖາມຄວາມຮູ້ທົ່ວໄປກ່ຽວກັບກົດໝາຍ

## ຜູ້ຊະນະ:

### ທ່ານ ໄຊພອນ ສີສຸພັນ

ຄະນະກຳມະການແຫ່ງຊາດເພື່ອກວດກາ ແລະ ຄວບຄຸມຢາເສບຕິດ, ນະຄອນຫຼວງວຽງຈັນ.

ຜູ້ເຂົ້າຮ່ວມກອງປະຊຸມທັງໝົດໄດ້ເຂົ້າຮ່ວມການຕອບຄຳຖາມ ຊຶ່ງເປັນການທົດສອບຄວາມຮູ້ທົ່ວໄປກ່ຽວກັບຫົວຂໍ້ຕ່າງໆທີ່ຈະຖືກນຳສະເໜີໃນກອງປະຊຸມ ເຊັ່ນ: ຄວາມຮູ້ກ່ຽວກັບ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນທາງດ້ານກົດໝາຍ, ການຟອກເງິນ, ການຄ້າມະນຸດ, ອາຊະຍາກຳສັດປ່າ, ການສໍ້ລາດບັງຫຼວງ ແລະ ອື່ນໆ.




ຮູບພາບຈາກຊ້າຍຫາຂວາ: ທ່ານ ໄຊພອນ ສີສຸພັນ ຮັບຂັນລາງວັນຈາກ ພະນະທ່ານ ແຊມ ເຊຣນເນີ, ອຸປະທູດຈາກສະຖານທູດລຸກຊຳບວກ ປະຈຳລາວ, ທ່ານ ຈັນທີ ໄປລີວັນ, ຫົວໜ້າກົມກວດກາຄະດີອາຍາ, ອົງການໄອຍະການປະຊາຊົນສູງສຸດ ແລະ ທ່ານ ຣີຊາດ ຟີລິບປາດ, ປະທານສະຖາບັນຊ່ວຍເຫຼືອທາງດ້ານກົດໝຍ ແລະ ວິຊາການ.

# ຮູບພາບບັນຍາກາດຂອງກອງປະຊຸມ














National Conference on combating organised crime, with a focus on money laundering, mutual legal assistance, and evidence in criminal proceedings.
February 11th-13th 2020,
National Convention Centre, Vientiane
LUXEMBOURG
AID & DEVELOPMENT
LUX DEV




















National Conference on combating organised crime,
laundering, mutual legal assistance, and evidence in











Institute for Legal Support and Technical Assistance

## ຕິດຕາມພວກເຮົາໄດ້ທີ່

www.ilsta.org



ILSTA Laos



@ILSTA_Laos




ILSTA in Laos




ຫ້ອງການສະຖາບັນຊ່ວຍເຫຼືອທາງດ້ານກົດໝາຍ ແລະ ວິຊາການ
ຊັ້ນ 6, ຕຶກ NNN, ຖະໜົນ ບູລີຈັນ, ບ້ານ ໂພນສີນວນ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: (+856) 21 41 0095 ແຟັກ: (+856) 21 41 0096 ອີເມວ: contact@ilsta.org ເວັບໄຊ: www.ilsta.org